ສະບັບທີ 01, ຊຸດທີ 01 (2026); 96-108

ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010109



ໝູນໃຊ້ແນວຄິດເສດຖະສາດການເມືອງ ຂອງອັງແກນ ເຂົ້າໃນການພັດທະນາເສດຖະກິດ ຢຸ ສປປ ລາວ

Applying the Concepts of F. Engels' Political Economy on developing economy in Lao PDR

ປອ. ນ. ຄຳແພນ ເພັງພັກດີ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
E-mail: KhamphenePhengphacdy@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ:15 ຕຸລາ 2025
ຈັດພິມອອນລາຍ: 24 ມີຖຸນາ 2026

ບົດຄັດຫຍໍ້:

ການພັດທະນາເສດຖະກິດ ແມ່ນຂະບວນການເຄື່ອນໄຫວກະທົບຂອງພາກລັດ ແລະ ເອກະຊົນ ທີ່ພາໃຫ້ເກີດຄວາມຈະເລີນທາງດ້ານເສດຖະກິດຢ່າງສະໝ່ຳສະເໝີ ແລະ ເປັນ ເວລາຍາວນານ, ໂດຍອີງໃສ່ຜົນສຳເລັດ ແລະ ຄວາມກ້າວໜ້າທາງດ້ານການຄົ້ນຄວ້າ ວິທະຍາສາດ-ເຕັກໂນໂລຊີ ແລະ ການພັດທະນາລະບົບຂໍ້ມູນຂ່າວສານທີ່ທັນສະໄໝ ຂອງ ບັນດາຫົວໜ່ວຍເສດຖະກິດ ທີ່ມີການຈັດຕັ້ງການຜະລິດທຸລະກິດ ມີການຄຸ້ມຄອງ, ບໍລິຫານ ດຳເນີນທຸລະກິດຜະລິດສິນຄ້າ ແລະ ບໍລິການ ໃຫ້ນັບມື້ນັບດີຂຶ້ນໄປເລື້ອຍໆ ທັງໃນດ້ານ ປະລິມານ ແລະ ຄຸນນະພາບ. ດ້ວຍຄວາມມຸ່ງຫວັງ ເຮັດແນວໃດໃຫ້ໄລຍະຂ້າມຜ່ານສຳເລັດລົງ ໂດຍໄວ ແລະ ກ້າວເຂົ້າສູ່ໄລຍະປ່ຽນແປງໃໝ່, ນັບແຕ່ປີ 1986 ເຖິງປັດຈຸບັນ, ຈິນຕະນາການໃ ໝ່ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງ ໃນການໝູນໃຊ້ທິດສະດີເສດຖະສາດການເມືອງຂອງ ຟຣີດຣິກ ອັງແກນ ເຂົ້າໃນພຶດຕິກຳ ຍິ່ງເຮັດໃຫ້ພວກເຮົາເຂົ້າໃຈເນື້ອໃນທີ່ວ່າ ທິດສະດີ ແລະ ວິທີວິທະຍາເປັນເອກະພາບກັນຢູ່ສະເໝີ, ສະໜິດຕິດພັນກັນບໍ່ອາດຕັດແຍກໄດ້ ແລະ ໄດ້ສອດ ຫ້ອຍຢູ່ໃນຫຼັກທິດສະດີເປັນວິນຍານທີ່ມີຊີວິດຂອງທິດສະດີ; ສ່ວນທິດສະດີ ແມ່ນຜະລິດຕະ ພັນອັນແນ່ນອນຂອງການໝູນໃຊ້ວິທີວິທະຍາຢ່າງປະດິດສ້າງ ເຂົ້າໃນພຶດຕິກຳຕົວຈິງ.

ລັດທິມາກ ຍາມໃດກໍ່ແມ່ນຫຼັກທິດສະດີເປີດ ແລະ ມີການພັດທະນາຂະຫຍາຍຕົວຢ່າງ ບໍ່ຢຸດຢັ້ງ ກໍ່ຍ້ອນກະໂຕຄວາມເປັນເອກະພາບທາງດ້ານສັດຈະວິພາກ, ຄວາມຕິດພັນສະໜິດແ ໜ້ນແບບກາຍອິນຊີ ລະຫວ່າງ ວິທີວິທະຍາ ແລະ ທິດສະດີ. ຍ້ອນແນວນັ້ນ ມັນຈຶ່ງສົມເປັນ ບົດບາດພື້ນຖານແຫ່ງແນວຄິດ ແລະ ເປັນເຂັມທິດໃຫ້ແກ່ການເຄື່ອນໄຫວ ຂອງພັກຄອມມູ ນິດຢ່າງສົມກຽດ. ສະນັ້ນ, ພວກເຮົາຕ້ອງກຳແໜ້ນເນື້ອໃນຈິດໃຈ ຂອງວິທີສັດຈະວິພາກ, ໝູນ ໃຊ້ວິທີດັ່ງກ່າວຢ່າງປະດິດສ້າງໃນການຄົ້ນຄວ້າ, ວິເຄາະບັນຫາ, ເຫດການຕ່າງໆທີ່ເກີດຂຶ້ນຈາກ ພຶດຕິກຳ. ແກ້ໄຂບັນຫາທ່າດແທ້ຂອງສາຍພົວພັນຢ່າງຈະແຈ້ງ, ຄົ້ນຄວ້າຄວາມຂັດແຍ່ງ ແລະ ຄົ້ນ ຄວ້າບັນດາທິດທາງ, ວິທີແກ້ໄຂຢ່າງລະອຽດ. ນີ້ກໍ່ແມ່ນການປະກອບສ່ວນໃນການ ປະຕິບັດໜ້າທີ່ ທີ່ກ່າວມາຂ້າງເທິງໃຫ້ແທດເໝາະກັບພຶດຕິກຳ ຢູ່ປະເທດເຮົາ.

ຄຳສັບສຳຄັນ: ການພັດທະນາເສດຖະກິດ, ທິດສະດີຂອງອັງແກນ, ການໝູນໃຊ້ທິດສະດີ.

Abstract:

Economic development is a process that leads to steady and long-term economic prosperity, based on the success and progress in scientific-technological research and the development of modern information systems, of economic units that organize business production and manage the business of producing goods and services to improve day by day both in terms of quantity and quality. In the transition period before the new change using F. Engels theory of political economy is the basic theory to convey the research results of the researchers. Hoping to make the transition as soon as possible. Stepping into a new period of change, from 1986 to now, until the new plan has been clearly shown. In using the political economy theory of F. Engels in behavior, we understand the content that the theory and the scientific method are always unified, closely related and cannot be separated, and are based on the principle of good theory as the living spirit of the theory; The theory is the product of the creative application of scientific methods in actual behavior.

Marxism has always been an open and constantly expanding theory because of the unity of the animal and the anatomy, the close organic connection between the method and the theory. Because of that, it is considered to be the fundamental role of thinking and a compass for the activities of the Communist Party. Therefore, we must not grasp the mental content of the way animals will analyze, use this method creatively in research, and analyze problems, events that occur from behavior, solve the real situation of the relationship clearly, and research the conflict and research directions and solutions in detail. This is a contribution to the performance of the duties mentioned above to match the behavior in our country.

Key words: Economic Development**,** Engels' Theory, Theory Application

I. ປະຫວັດການກຳເນີດ ພື້ນຖານທິດສະດີເສດຖະສາດການເມືອງ ຂອງ ຟຣິດຣິກ ອັງແກນ.

ຟຣິດຣິກ ອັງແກນ: ເກີດເມືອ ວັນທີ 28 ພະຈິກ 1820, ທີ່ເມືອງ ບຣາແມນ ປະເທດເຢຍລະມັນ, ພໍ່ ຊື່ວ່າ ທ່ານ ຟຣີຣິກ ອັງແກນ ຄືກັນ, ເປັນເຈົ້າຂອງໂຮງງານຕ່ຳແຜ່ນເປັນຄົນທີ່ມີຜູ້ຄົນເຄົາລົບນັບຖືຢ່າງຫຼວງຫຼາຍ, ຕະກຸນ ອັງແກນ ຖືວ່າເປັນຕະກຸນໃຫຍ່, ມີກຳມະສິດທີ່ດິນ ແລະ ໂຮງຈັກໂຮງງານເປັນຂອງຕົນເອງຢ່າງຫຼວງຫຼາຍ, ແມ່ຂອງເພິ່ນ ຊື່ວ່າ ເອລິຊາເບດ ອັງແກນ. ຟ. ອັງແກນ ມີອ້າຍເອື້ອຍນ້ອງນຳກັນທັງໝົດ 8 ຄົນ, ຊາຍ 4 ຍິງ 4, ຟ. ອັງແກນ ເປັນລູກຊາຍກົກ. ໂດຍປະຕິບັດຕາມຄວາມປາຖະໜາຂອງພໍ່ ປີ 1837 ຟ. ອັງແກນ ໄດ້ເຂົ້າຮຽນການຄ້າ ແຕ່ທ່ານຊໍ້າພັດບໍ່ເອົາໃຈໃສ່ເລີຍຕໍ່ວິຊາການຄ້າ ແລະ ເພິ່ນໃຊ້ເວລາສ່ວນໃຫຍ່ສຶກສາຮ່ຳຮຽນສ່ວນຕົວ, ເພິ່ນຮຽນເກັ່ງຫຼາຍວິຊາ ເປັນຕົ້ນ: ຟີສິກສາດ, ເຄມີສາດ, ຄະນິດສາດ, ປະຫັວດສາດ, ພູມສາດ, ແຕ້ມຮູບ, ໂນດດົນຕີ ແລະ ປັດຊະຍາ. ນອກນັ້ນເພິ່ນຍັງມີຄວາມສາມາດດ້ານພາສາສາດ ເຊິ່ງເພິ່ນສາມາດເວົ້າໄດ້ເຖິງ 20 ພາສາ. ນອກນັ້ນ ຍັງມັກຫຼິ້ນກິລາ ເຊັ່ນ: ມັກຂີ່ມ້າ, ຟັນດາບ, ລອຍນ້ຳ ແລະ ອື່ນໆ.

ໃນປີ 1842 ຟ. ອັງແກນ ໄດ້ເດີນທາງໄປເມືອງ ແມນເຊັດສະເຕີ ປະເທດອັງກິດ ເພື່ອລົງຝຶກຫັດກ່ຽວກັບການຄ້າ ທີ່ໂຮງງານຕ່ຳແຜ່ນຊຶ່ງພໍ່ເພິ່ນເປັນເຈົ້າຂອງຜູ້ໜຶ່ງ. ເວລານັ້ນ ອັງກິດ ເປັນປະເທດທີ່ອຸດສາຫະກຳກ້າວໜ້າກວ່າໝູ່ຢູ່ໃນໂລກ. ຂະບວນການກຳມະກອນກໍ່ຂະຫຍາຍຕົວກວ່າໝູ່. ການລຸກຮືຂຶ້ນຕໍ່ສູ້ຂອງພວກເຂົາ ມີລັກສະນະຈັດຕັ້ງ ແລະ ກວ້າງຂວາງ. ຕໍ່ມາ ຟ. ອັງແກນ ໄດ້ສົ່ງບົດຄວາມຈຳນວນໜຶ່ງ ໄປໃຫ້ “ໜັງສືພິມກາແຊັດ ເຣນານ” ເພື່ອລົງໃນວາລະສານລາຍປີ ຝຣັ່ງ-ເຢຍລະມັນ ຊຶ່ງເວລານັ້ນ ທ່ານ ກ. ມາກ ເປັນບັນນາທິການຢູ່. ບົດເຫຼົ່ານັ້ນ ໄດ້ຖືກຕີພິມເຜີຍແຜ່ຢ່າງໄວວາ. (ເວລານັ້ນ ທ່ານ ອັງແກນ ຢູ່ອັງກິດ, ທ່ານ ມາກ ຢູ່ຝຣັ່ງ) ແລະ ໜຶ່ງໃນຈຳນວນນັ້ນແມ່ນ “ບົດທີ່ປະກອບເຂົ້າໃນການຕຳນິວິຈານເສດຖະສາດການເມືອງ”. ນອກນັ້ນ, ທ່ານຍັງໄດ້ພັນລະນາເຖິງຮູບພາບທີ່ເປັນຈິງກ່ຽວກັບຄວາມເດືອດຮ້ອນ ຂອງຊົນຊັ້ນກຳມະກອນ.

ປີ 1845-1846 ມາກ-ອັງແກນ ໄດ້ຮ່ວມກັນຂຽນປຶ້ມ “ແນວຄິດເຢຍລະມັນ” ຊຶ່ງແມ່ນປຶ້ມຫົວທຳອິດທີ່ໄດ້ຂຽນກ່ຽວກັບຫຼັກການອັນສຳຄັນທີ່ສຸດ ຂອງລັດທິກອມມູນິດ ວິທະຍາສາດແບບເປີດກ້ວາງ. “ໄດ້ກຳນົດແນວຄິດ ກ່ຽວກັບ ລັກສະນະກົດເກນແຫ່ງການປ່ຽນແທນຮູບຖານສັງຄົມ, ໄດ້ພິສູດໃຫ້ເຫັນເຖິງການຫຼີກລ່ຽງບໍ່ໄດ້ແຫ່ງການພັງທະລາຍຂອງລະບອບທຶນນິຍົມ, ໄດ້ຢັ້ງຢືນວ່າ ການຂະຫຍາຍຕົວຂອງ

ກຳລັງການຜະລິດ ແລະ ການພົວພັນການຜະລິດນັ້ນແມ່ນພື້ນຖານ ຂອງຂະບວນວິວັດແຫ່ງການຂະຫຍາຍຕົວ ຂອງສັງຄົມມະນຸດ. ປີ 1847 ອັງແກນ ໄດ້ກະກຽມຮ່າງໂຄງການສະຫະພັນນັກກອມມູນິດ ທີ່ໃຫ້ຊື່ ວ່າ: “ບັນດາຫຼັກການຂອງລັດທິກອມມູນິດ” ຕໍ່ມາໄດ້ ກາຍເປັນພື້ນ ຖານຂອງ “ຖະແຫຼງການກອມມູນິດ” ທີ່ມາກ-ອັງ ແກນ ໄດ້ຂຽນຂຶ້ນ.ໃນປີ 1848. ນອກນັ້ນ, ຟ. ອັງແກນ ໄດ້ຂຽນ ປຶ້ມວິທະຍາສາດຈຳນວນຫຼວງຫຼາຍ ສຳຄັນກວ່າໝູ່ແມ່ນປຶ້ມ “ຕ້ານ-ດຸຍຣິງ” ຊຶ່ງເພິ່ນໄດ້ຊີ້ແຈງຢ່າງປະດິດສ້າງ ໃຫ້ເຫັນສາມ ພາກສ່ວນປະກອບຂອງລັດ ທິມາກ-ເລນິນ ຄື: ປັດຊະຍາ ມາກ-ເລ ນິນ, ເສດຖະສາດການເມືອງ ມາກ-ເລນິນ ແລະ ລັດທິກອມມູນິດ ວິທະຍາສາດ. ພາຍຫຼັງທີ່ ກ. ມາກ ເສຍຊີວິດ, ອັງແກນ ໄດ້ຮຽບ ຮຽງປຶ້ມ ທຶນ ເຫຼັ້ມ I ແລະ ເຫຼັ້ມ II. ຊຶ່ງທັງສອງເຫຼັ້ມ ແມ່ນ ຜົນງານລວມຂອງມາກ-ອັງແກນ” (ຄະນະໂຄສະນາອົບຮົມສູນ ກາງພັກ, 2013, ໜ້າ 135).

ເພື່ອລະນຶກເຖິງວັນຄ້າຍວັນເກີດຂອງທ່ານ ຟຣີດຣິກ ອັງ ແກນ ຄົບຮອບ 204 ປີ (28/11/ 1820-28/11/2024) ການ ປະກອບສ່ວນຄົ້ນຄວ້າເສດຖະສາດການເມືອງ ຂອງທ່ານ ຟຣີດຣິກ ອັງແກນ ແມ່ນຍິ່ງໃຫຍ່ທີ່ສຸດຖ້າເບິ່ງທາງດ້ານປະລິມານ ສະເພາະ ນິພົນຂອງທ່ານ ຟຣີດຣິກ ອັງແກນ ບໍ່ນັບບັນດານິພົນທີ່ຂຽນຮ່ວມ ກັບ ກາກມາກ, ນັບແຕ່ໄວໜຸ່ມ ຜ່ານບັນດານິພົນ: ການຕໍ່ານິວິພາກ ເສດຖະສາດການ ເມືອງ ຂອງຟຣີດຣິກ ອັງແກນ ໂດຍເລີ່ມຈາກ ເສດຖະສາດການເມືອງທຶນນິຍົມສະໄໝເກົ່າຫາສະໄໝໃໝ່; ການ ກຳເນີດ, ຂະຫຍາຍຕົວໄດ້ມີບົດບາດສຳຄັນອັນໃຫຍ່ຫຼວງ ບໍ່ພຽງແຕ່ ທາງດ້ານທິດສະດີ ກ່ຽວກັບກົດເກນການເຄື່ອນໜັງ ຂອງພື້ນຖານ ເສດຖະກິດ ໃນບັນດາເງື່ອນໄຂທີ່ແຕກຕ່າງກັນ ໃນປະຫວັດສາດ ມວນມະນຸດເທົ່ານັ້ນ ແຕ່ຍັງເປັນພື້ນຖານທິດສະດີ ໃຫ້ແກ່ການກຳ ເນີດບັນດານະໂຍບາຍພັດ ທະນາເສດຖະກິດ ໃນແຕ່ລະໄລຍະ ປະຫວັດສາດ.

ຈາກນັ້ນ ຮັບເອົາບັນດາສິ່ງທີ່ຍອດຍິ່ງຂອງມວນມະນຸດ ທີ່ໄດ້ ບັນລຸຜ່ານມາ ໃຫ້ແກ່ການຄົ້ນຄວ້າເສດຖະກິດ ເພື່ອໝູນໃຊ້ຢ່າງປະ ດິດສ້າງ ເຂົ້າໃນການພັດທະນາເສດຖະກິດ. ທ່ານຟຣີດຣິກ ອັງແກນ ລົງເລິກຄົ້ນຄວ້າເສດຖະສາດການເມືອງ ໂດຍຜ່ານຕຳນິວິພາກເສດ ຖະສາດການເມືອງ: ສະພາບການດຳລົງຊີວິດຂອງຊົນຊັ້ນ ກຳມະກອນ ຢູ່ປະເທດອັງກິດ ເພິ່ນໄດ້ຂຽນບັນດາບົດສົ້ນທີ່ພົວພັນ ກັບເສດຖະ ກິດທຶນນິຍົມ ໄດ້ຂະຫຍາຍຕົວຂຶ້ນເທິງລະບອບການ ຫັນເປັນໂຮງຈັກໂຮງງານ... ມີຄວາມໝາຍຄືກັບອາວຸດທີ່ແຫຼມຄົມ ເຂົ້າໃນການຕໍ່ສູ້ບັນດາກະແສແນວຄິດ, ທິດສະດີນາຍທຶນນ້ອຍທີ່ຝືນ ປະຕິວັດ, ນຳສະເໜີທັດສະນະ, ແນວຄວາມຄິດ ທີ່ມີລັກສະນະ ວິທະຍາສາດ ແລະ ລັກສະນະປະຕິວັດ. ຜ່ານບັນດານິພົນ ແລະ ບົດ ຂຽນນັ້ນ ຟຣີດຣິກ ອັງແກນ ໄດ້ປະຕິເສດບັນດາທັດສະນະທິດສະດີ ບູຊາລະບອບກຳມະສິດເອກະຊົນ ເວົ້າລວມ, ລະບອບກຳມະສິດທຶນ ນິຍົມ ເວົ້າສະ ເພາະ, ເຜີຍແຜ່ລະບອບຊຸດຣິດ, ລະບອບກົດຂີ່, ລະບອບແກ້ງແຍ້ງເສລີ, ໄພພິບັດວິກິດການ ແລະ ໄພຫວ່າງງານ, ໄພພິບັດແຫ່ງການອຶດຫິວ ແລະ ທຸກຈົນ, ສະພາບເສດຖະກິດ-ສັງຄົມ , ຄວາມລຳບາກຍາກແຄ້ນ ຂອງຊົນຊັ້ນກຳມະກອນ ໃນສັງຄົມທຶນນິຍົມ. ບົນພື້ນຖານການຮັບຮູ້ທີ່ມີວິທະຍາສາດ ແລະ ປະຕິວັດຂອງ ຟຣີດຣິກ ອັງແກນ ໄດ້ຊອກຄົ້ນຫາສາເຫດທີ່ເລິກເຊິ່ງເປັນກົກເປັນຮາກ ຕົ້ນກຳ ເນີດແຫ່ງຄວາມທຸກຈົນ ຂອງຊົນຊັ້ນກຳມະກອນ ນັ້ນແມ່ນລະບອບ ກຳມະສິດເອກະຊົນ.

II. ການປະກອບສ່ວນເນື້ອໃນພື້ນຖານ ກ່ຽວກັບທິດສະດີ ເສດຖະສາດການເມືອງ ຂອງ ຟຣີດຣິກ ອັງແກນ.

ການປະກອບສ່ວນໃນບົດຄວາມ ຕຳນິວິພາກເສດຖະສາດການ ເມືອງ ຂອງຟຣີດຣິກ ອັງແກນ ໄດ້ໃຫ້ທັດສະນະຕໍ່ານິວິພາກເສດຖະ ສາດການເມືອງກ່ອນມາກ: “ວິຊາເສດຖະສາດການເມືອງ ໄດ້ປາກົດ ຕົວຂຶ້ນ ໃນຖານະທີ່ເປັນຜົນຢ້ອນຫຼັງແບບທຳມະຊາດ ແຫ່ງການເປີດ ກວ້າງການຄ້າ: ແລະ ພ້ອມກັນກັບມັນ, ລະບົບຫຼອກລວງອັນຫນຶ່ງກໍ່ ໄດ້ຂະຫຍາຍຕົວຢ່າງຖືກກົດໝາຍ, ວິຊາວິທະຍາສາດ ວ່າດ້ວຍການ ສ້າງຄວາມຮັ່ງມີ ກໍ່ປາກົດຕົວຂຶ້ນປ່ຽນແທນໃຫ້ແກ່ວິຊາຄ້າຂາຍແບບ ງ່າຍ ດາຍທີ່ໄຮ້ວິທະຍາສາດ” (ກາກ ແລະ ຟຣີດຣິກ, 2010, ໜ້າ 103).

ໃນການຕຳນິວິພາກ ວິຊາເສດຖະສາດການເມືອງ ຫຼືວ່າ ວິທະຍາ ສາດ ວ່າດ້ວຍການສ້າງຄວາມຮັ່ງມີນີ້ ກຳເນີດເກີດຂຶ້ນມາຈາກ ຄວາມຍາດແຍ່ງຜົນປະໂຫຍດ ແລະ ຈາກຄວາມໂລບມາກໂລພາຂອງ ພວກພໍ່ຄ້າ ທີ່ເຫັນແກ່ຜົນປະໂຫຍດສ່ວນຕົວທີ່ຮ້າຍແຮງທີ່ສຸດ. ເຂົາເຈົ້າຍັງຄົງມີຄວາມຄິດແບບໄຮ້ດຽງສາ ທີ່ຄ້າຍກັບວ່າຄວາມຮັ່ງມີ ນັ້ນແມ່ນຢູ່ທີ່ເງິນຄຳ; ດັ່ງນັ້ນ ຢູ່ບ່ອນໃດກໍ່ຕ້ອງເກືອດຫ້າມການຂາ ອອກໂລຫະທີ່ “ປະເສີດ” ໃຫ້ໄດ້ໄວເທົ່າໃດແມ່ນຍິ່ງດີເທົ່ານັ້ນ. ບັນດາ ປະ ເທດທີ່ເປັນປໍລະປັກກັນ ຄືກັນກັບວ່າພວກລັກໂລບ ສອງມືໂອບ ກອດຖົງເງິນທີ່ແສນແພງຂອງຕົນເອົາໄວ້ຢ່າງແໜ້ນ ແຕ່ພັດຫັນໜ້າໄປ ຫຼຽວເບິ່ງເພື່ອນບ້ານໃກ້ຄຽງຂອງຕົນດ້ວຍສາຍຕາອິດສາກຽດຊັງ ແລະ ລະແວງສົງໃສ. ກົນອຸບາຍລ່ຽມລາຍທຸກຢ່າງ ລ້ວນແຕ່ໄດ້ຖືກອອກມາ ນຳໃຊ້ ເພື່ອຫຼອກເອົາເງິນສົດຂອງບັນດາປະເທດ ທີ່ມີການພົວພັນ

ຄ້າຂາຍກັບປະເທດຕົນ ໃຫ້ໄດ້ຍິ່ງຫຼາຍຍິ່ງດີ ແລະ ຮັກສາຈຳນວນເງິນຄຳທີ່ໄດ້ຈາກຂາເຂົ້າໂດຍໂຊກລາບນັ້ນ ໄວ້ຢ່າງແໜ້ນແຟ້ນໃຫ້ຢູ່ພາຍໃນກອບພາສີອາກອນ. ໄດ້ຊີ້ໃຫ້ເຫັນ: “ຂໍ້ຂັດແຍ່ງຕ່າງໆ ກໍ່ໄດ້ປາກົດອອກຢ່າງຈະ ແຈ້ງພໍສົມຄວນ ແຕ່ເຂົາຍັງບໍ່ທັນໄປເຖິງການຄົ້ນຄວ້າປະຖົມປັດໄຈຕ່າງໆ ແລະ ຍັງຄົງແບກຫາບຄວາມຮັບຜິດຊອບ ກ່ຽວກັບທິດສະດີທັງໝົດ” (ມາກ ແລະ ຟຣີດຣິກ, 2010, ໜ້າ 108). ຜົນງານຕັ້ງໜ້າອັນໜຶ່ງອັນດຽວ ຂອງວິຊາເສດຖະສາດການເມືອງ ຂອງຝ່າຍເສລີນັ້ນແມ່ນໄດ້ສະເໜີບັນດາກົດເກນ ຂອງລະບອບກຳມະສິດເອກະຊົນ. ກົດເກນເຫຼົ່ານີ້ ແມ່ນມີແທ້ຢູ່ໃນວິຊາເສດຖະສາດການເມືອງດັ່ງກ່າວ, ເຖິງວ່າມັນຍັງບໍ່ທັນຂະຫຍາຍຕົວ ເຖິງຂັ້ນຖອດຖອນໄດ້ບັນດາຂໍ້ສະ ຫຼຸບສຸດທ້າຍ ແລະ ຍັງບໍ່ທັນໄດ້ສະເໜີຢ່າງຈະແຈ້ງກໍ່ຕາມ. ຟຣີດຣິກ ອັງແກນ ໄດ້ສະຫຼຸບວ່າ: “ໃນເມື່ອຕຳນິວິພາກເສດຖະສາດການເມືອງ ພວກເຮົາຈະຄົ້ນຄວ້າບັນດາມາດຕະການອັນພື້ນຖານ, ຈະຊອກຄົ້ນຂໍ້ຂັດແຍ່ງໂດຍແມ່ນລະບອບການຄ້າເສລີເອົາເຂົ້າມາຕື່ມໃສ່ ແລະ ພວກເຮົາຈະສະເໜີຂໍ້ສະຫຼຸບຕ່າງໆ ທີ່ຖອດຖອນມາໄດ້ຈາກສອງດ້ານຂອງຂໍ້ຂັດແຍ່ງນັ້ນ ” (ມາກ ແລະ ຟຣີດຣິກ, 2010, ໜ້າ 109). ຈາກນັ້ນກໍ່ຈະເຫັນໄດ້ເຖິງການຊອກຫາເສັ້ນທາງສ້າງຄວາມຮັ່ງມີສົ້ນທີ່ສຸດ, ຟ. ອັງແກນ ໄດ້ໃຫ້ທັດສະນະວ່າ “ນັກເສດຖະສາດ ບໍ່ສາມາດຮັບຮູ້ວ່າ ການຜັນແປຂອງສິ່ງວັດຖຸຄືແນວນັ້ນແມ່ນຖືກຕ້ອງ; ຖ້າບໍ່ເປັນເຊັ່ນນັ້ນ ກໍ່ຈະເໝືອນດັ່ງສິ່ງທີ່ໄດ້ກ່າວມາຂ້າເທິງ ລາວຈະຕ້ອງປະຖິ້ມທິດສະດີ ກ່ຽວກັບການແກ້ງແຍ້ງທັງໝົດຂອງຕົນເອງ; ລາວຈະຕ້ອງມອງເຫັນລັກສະນະໄຮ້ຄວາມໝາຍ” (ມາກ ແລະ ຟຣີດຣິກ, 2010, ໜ້າ 103). ບັນດານັກເສດຖະສາດ ທີ່ພວກເຂົາຕ້ອງສັງເກດຕີລາຄານັ້ນ ຍິ່ງຢູ່ໃກ້ກັບສະໄໝພວກເຮົາເທົ່າໃດ ຄ່ຳຕັດສິນຂອງພວກເຂົາຕ່ຳເຂົາເຈົ້າ ກໍ່ຍິ່ງເຂັ້ມງວດເທົ່ານັ້ນ. ຟ. ອັງແກນ ໄດ້ໃຫ້ທັດສະນະວ່າ: “ແຮງງານແມ່ນປັດໄຈຕົ້ນຕໍຂອງການຜະລິດ, ເປັນບໍ່ເກີດຂອງຊັບສິນສິ່ງຂອງ” (ມາກ ແລະ ຟຣີດຣິກ, 2010, ໜ້າ 126) “ວິຊາເສດຖະສາດການເມືອງ ເລີ່ມຕົ້ນຈາກສິນຄ້າ, ໝາຍຄວາມວ່າ ເມື່ອຜະລິດຕະພັນຖືກນຳມາແລກປ່ຽນກັນ ລະຫວ່າງ ບຸກຄົນ ຫຼື ລະຫວ່າງບັນດາປະຊາຄົມສະຫະຊີບປະຖຳມບູຮານ. ຜະລິດຕະພັນຖືກນຳເຂົ້າສູ່ການແລກປ່ຽນ ແມ່ນມັນໄດ້ກາຍເປັນສິນຄ້າ”. “ວິຊາເສດ ຖະສາດການເມືອງ ບໍ່ໄດ້ຄົ້ນຄວ້າວັດຖຸພັນ, ແຕ່ຄົ້ນຄວ້າບັນດາສາຍພົວພັນ ລະຫວ່າງ ຄົນກັບຄົນ, ພິຈາລະນາເຖິງທີ່ສຸດແລ້ວແມ່ນ ລະຫວ່າງ ຊົນຊັ້ນກັບຊົນຊັ້ນ, ແຕ່ການພົວພັນເຫຼົ່ານັ້ນ ເວລາໃດກໍ່ຕິດພັນກັບວັດຖຸພັນ ແລະ ສະແດງອອກຄືກັບວ່າເປັນວັດຖຸພັນ” (ມາກ ແລະ ຟຣີດຣິກ, 2011, ໜ້າ 901).

ຖ້າຫາກວ່າ ພິຈາລະນາສິນຄ້າໂດຍເລີ່ມຈາກບັນດາດ້ານທີ່ແຕກຕ່າງກັນຂອງມັນ ໂດຍສະເພາະແມ່ນສິນຄ້າໃນຮູບຖານະ ຫຍາຍຕົວ ຄົບຖ້ວນຂອງມັນ, ຫາກບໍ່ແມ່ນສິນຄ້າທີ່ພວມຢູ່ໃນສະ ພາບພວມ ຂະຫຍາຍຕົວຢ່າງລຳບາກກາກກຳ ໃນການເອົາວັດຖຸແລກເອົາວັດຖຸ ໃນສະໄໝສະຫະຊີບປະຖຳມບູຮານ, ລະຫວ່າງສອງປະຊາຄົມບູຮານ, ພວກເຮົາສາມາດເຫັນໄດ້ສອງດ້ານສິນຄ້າ ແມ່ນຄຸນຄ່າໃຊ້ສອຍ ແລະ ຄຸນຄ່າແລກປ່ຽນ. “ເມື່ອຄຸນຄ່າໃຊ້ສອຍ ແລະ ຄຸນຄ່າແລກ ປ່ຽນໄດ້ຖືກວິເຄາະແລ້ວ ສິນຄ້າປາກົດຕົວຂຶ້ນໃນຖານະເປັນເອກະພົບທີ່ເປັນເອກະພາບໂດຍກົງ ຂອງສອງຄຸນຄ່ານັ້ນ, ໃຕ້ຮູບຖານທີ່ມັນກ້າວເຂົ້າສູ່ຄຸນຄ່າແລກປ່ຽນ” (ມາກ ແລະ ຟຣີດຣິກ, 2011, ໜ້າ 902).ຍ້ອນການຄົ້ນພົບລັກສະນະສອງດ້ານ ຂອງແຮງງານຜະລິດສິນຄ້າ: ແຮງງານຮູບປະທຳ ແລະ ແຮງງານນາມມະທຳຂອງມາກ ຄຸນຄ່າສິນຄ້າແມ່ນພື້ນຖານລວມສຸດໃຫ້ແກ່ການແລກປ່ຽນ ລະຫວ່າງ ສິນຄ້າທີ່ມີຄຸນຄ່າໃຊ້ສອຍຕ່າງກັນ. ບົນພື້ນຖານໄຈ້ແຍກໃຫ້ເຫັນແຈ້ງບັນດາຮູບການຄຸນຄ່າຂອງສິນຄ້າ. ຟ. ອັງແກນ ໄດ້ຊີ້ແຈງລັກສະນະຈຳເປັນແນ່ ນອນຂອງການກຳເນີດ, ກົກເຄົ້າທາດແທ້, ພາລະບົດບາດຂອງເງິນໃນຖານະແມ່ນສິນຄ້າພິເສດ. ພ້ອມກັນນັ້ນ, ຍັງຊີ້ໃຫ້ເຫັນກົດເກນຈຳລະຈອນເງິນຕາ ໃນພື້ນຖານການຜະລິດສິນຄ້າ. ຈາກບັນດາມາດຕະເກນພື້ນຖານຂອງທິດສະດີຄຸນຄ່າ ຂອງ ກ. ມາກ, ຟ. ອັງແກນ ສືບຕໍ່ດຳເນີນການຄົ້ນຄ້ວາ ກ່ຽວກັບ ເສດຖະກິດສິນຄ້າທີ່ຂະຫຍາຍຕົວສູງ-ພື້ນຖານການຜະລິດທຶນນິຍົມ. ຜ່ານແບບຕັ້ງລວມຂອງທຶນ (ງ-ສ-ງ,) ກ. ມາກ ໄດ້ອະທິບາຍບັນດາເງື່ອນໄຂຈຳເປັນຢ່າງມີວິທະຍາສາດ ເພື່ອໃຫ້ພື້ນຖານການຜະລິດສິນຄ້າທຶນນິຍົມ ກຳເນີດເກີດຂຶ້ນ, ທິດສະດີສິນຄ້າກຳລັງແຮງງານຂອງ ກ. ມາກ ໄດ້ກາຍເປັນກະແຈແກ້ໄຂຂໍ້ຂັດແຍ່ງແບບຕັ້ງລວມຂອງທຶນ ສ້າງພື້ນຖານວິທະຍາສາດໃນການຮັບຮູ້ທາດແທ້ ແລະ ກົກເຄົ້າ ຂອງຄຸນຄ່າສ່ວນເກີນທຶນນິຍົມ.

ບົນພື້ນຖານການຮັບຮູ້ຢ່າງວິທະຍາສາດ ກ່ຽວກັບທາດແທ້ຄຸນຄ່າສ່ວນເກີນທຶນນິຍົມ, ກ. ມາກ ໄດ້ອະທິບາຍແຈ້ງທາດແທ້, ຮູບຖານຂອງເງິນຄ່າແຮງງານໃນທຶນນິຍົມ ກໍ່ຄືພື້ນຖານວິທະຍາສາດ ອະທິບາຍຄວາມແຕກຕ່າງກັນໃນຂັ້ນເງິນເດືອນ ລະຫວ່າງ ບັນດາປະເທດໃນເງື່ອນໄຂຂະຫຍາຍຕົວຕ່າງກັນ. ຜ່ານການຄົ້ນຄວ້າຂະບວນວິວັດການສະສົມທຶນ ແລະ ການຜະລິດສຳງ່າຍດາຍ, ຟ. ອັງແກນ ໄດ້ອະທິບາຍແຈ້ງ ການຫັນຄຸນຄ່າສ່ວນເກີນເປັນທຶນ, ບັນດາປັດໄຈສະທ້ອນເຖິງຂະໜາດທຶນສະສົມ, ກົດເກນທົ່ວໄປຂອງການສະສົມທຶນ, ສະສົມທຶນແບບປະຖົມບູຮານ ແລະ ບົດບາດຂອງມັນ ຕໍ່ກັບການກຳເນີດລັດທິ

ທຶນນິຍົມ.

ຟ. ອັງແກນ ໄດ້ສືບທອດໝູນໃຊ້, ສ້າງວິທະຍາສາດເສດຖະສາດການເມືອງໃໝ່ ບົນພື້ນຖານເປົ້າໝາຍ, ວິທີຄົ້ນຄວ້າເນື້ອໃນ ແລະ ລັກສະນະຊົນຊັ້ນ. ການກຳເນີດເສດຖະສາດການເມືອງ ຂອງ ອັງແກນ ມີຄວາມຮັບຮູ້ແຕກຕ່າງກັນທາງດ້ານເປົ້າໝາຍ, ບົນ ພື້ນຖານການສະ ຫຼຸບໝາກຜົນການຄົ້ນຄວ້າ ຂອງບັນດາພັກຝ່າຍ ເສດຖະສາດການ ເມືອງທີ່ຄົ້ນຄວ້າຜ່ານມາກ່ອນນັ້ນ, ນຳໃຊ້ ທັດສະນະວັດຖຸນິຍົມປະ ຫວັດສາດ, ຟ. ອັງແກນ ໄດ້ກຳນົດເປົ້າໝາຍຄົ້ນຄວ້າເສດຖະສາດການເມືອງຄືດັ່ງນີ້:

ຕາມ ຟ. ອັງແກນ “ເສດຖະສາດການເມືອງ ຕາມຄວາມໝາຍ ກວ້າງທີ່ສຸດ ແມ່ນວິທະຍາສາດກ່ຽວກັບກົດເກນຄອບງຳການຜະລິດ ແລະ ການແລກປ່ຽນວັດຖຸອຸປະກອນ ແຫ່ງການດຳລົງຊີວິດວັດຖຸ ໃນສັງຄົມມະນຸດ. ການຜະລິດ ແລະ ແລກປ່ຽນແມ່ນສອງພາລະ ບົດບາດທີ່ຕ່າງກັນ. ອາດຈະບໍ່ມີການຜະລິດ ແຕ່ບໍ່ມີການແລກປ່ຽນ; ສ່ວນການແລກປ່ຽນ, ຍ້ອນການແລກປ່ຽນແນນອນຕ້ອງແມ່ນ ແລກປ່ຽນຜະລິດຕະພັນ, ສະນັ້ນ ບໍ່ອາດຈະມີການແລກປ່ຽນ ຖ້າບໍ່ ມີການຜະ ລິດ” (ການ ແລະ ຟຣີດຣິກ, 2013, ໜ້າ 239). ບັນດາ ເງື່ອນໄຂຄົນເຮົາຜະລິດຜະລິດຕະພັນ ແລະ ການແລກປ່ຽນ ໂດຍມີ ການປ່ຽນແປງຢູ່ເລື້ອຍໆຂຶ້ນກັບແຕ່ລະຊາດ, ແຕ່ລະປະເທດ, ແຕ່ລະ ຮຸ່ນຄົນ. ເພາະ ສະນັ້ນ, ວິຊາເສດຖະສາດການເມືອງ ບໍ່ອາດຈະເປັນ ວິຊາໜຶ່ງດຽວ, ເອກະພາບແຕ່ລະປະເທດ ແລະ ທຸກສະໄໝໃນ ປະຫວັດສາດ. ຄົ້ນ ຄວ້າຂໍ້ມູນທີ່ມີລັກສະນະປະຫວັດສາດ, ໝາຍ ຄວາມວ່າ ຂໍ້ມູນລ້ວນແຕ່ມີການປ່ຽນແປງຢູ່ເລື້ອຍໆ. ແຕ່ການຄົ້ນ ຂອງວິຊາເສດຖະສາດການເມືອງ ຂອງອັງແກນ. ກ່ອນອື່ນໝົດແມ່ນ ບັນດາກົດເກນສະ ເພາະແຕ່ລະໄລຍະການຂະຫຍາຍຕົວ ຂອງການ ຜະລິດ ແລະ ການແລກປ່ຽນ ຜ່ານການຄົ້ນຄວ້າຈຶ່ງສາມາດກຳນົດໄດ້ ບັນດາກົດເກນທີ່ມີລັກສະນະກວມລວມໃນການຜະລິດ ແລະ ແລກປ່ຽນຢູ່ໃນແຕ່ລະໄລຍະ. ແບບວິທີການແຈກຢາຍຜະລິດຕະ ພັນ ຂຶ້ນກັບແບບວິທີການຜະລິດ ແລະ ການແຈກຢາຍຂອງສັງຄົມ ໜຶ່ງທີ່ແນ່ນອນ ໃນປະຫວັດ ສາດສັງຄົມ ຂຶ້ນກັບບັນດາປັດໄຈ ປະຫວັດສາດສັງຄົມນັ້ນ. ເຖິງຢ່າງ ໃດກໍຕາມ ການແຈກຢາຍບໍ່ພຽງ ແຕ່ໄດ້ຮັບຜົນກະທົບຈາກການຜະລິດ ແລະ ການແລກປ່ຽນເທົ່ານັ້ນ, ມັນກໍ່ແມ່ນການກະທົບຄືນເຖິງແບບວິທີການຜະລິດ, ການ ແລກປ່ຽນມັນຮຽກຮ້ອງໃຫ້ມີການ ແຈກຢາຍທີ່ສອດຄ່ອງ ເຊິ່ງ ປະຫວັດສາດໄດ້ຜ່ານການຕໍ່ສູ້ເປັນເວລາດົນນານ. ການຂະຫຍາຍຕົວ ຂອງການຜະລິດ ແລະ ການແລກປ່ຽນ ພາໃຫ້ເກີດມີຄວາມຂັດແຍ່ງ ໃນການແຈກຢາຍ, ຈາກການແກ້ໄຂບັນດາຂໍ້ຄັດແຍ່ງນັ້ນ ຈະຊຸກຍູ້ໃຫ້ ແບບວິທີການຜະລິດທີ່ກຳລັງຄົງຕົວຢູ່ນັ້ນ ກ້າວໄປເຖິງພັງທະລາຍລົງ ແລະ ປ່ຽນແທນໂດຍແບບວິທີການຜະລິດໃໝ່ເກີດຂຶ້ນ.

ເພາະສະນັ້ນ, ເບິ່ງດ້ານການສະແດງອອກ, ເສດຖະສາດການ ເມືອງ ແມ່ນວິທະຍາສາດໜຶ່ງ, ວິຊາໜຶ່ງແຕ່ບໍ່ອາດຈະນຳໃຊ້ເຂົ້າໃນທຸກ ໄລຍະປະຫວັດສາດທຸກປະເທດ, ທຸກຍຸກສະໄໝໄດ້, ແຕ່ເສດຖະ ສາດການເມືອງ ແມ່ນວິທະຍາສາດມີລັກສະນະປະຫວັດສາດ. ມັນຄົ້ນ ຄວ້າພາຫະນະມີລັກສະນະປະຫວັດສາດ ມີຄວາມໝາຍວ່າ ແມ່ນ ພາຫະ ນະໜຶ່ງ ເວລາໃດກໍ່ມີການປ່ຽນແປງ, ກ່ອນອື່ນໝົດ ມັນ ຄົ້ນຄວ້າກົດ ເກນສະເພາະ ຂອງແຕ່ລະໄລຍະການຂະຫຍາຍຕົວ ຂອງ ການຜະລິດ ແລະ ແລກປ່ຽນ. “ມີແຕ່ການຄົ້ນຄວ້າຄືແນວນັ້ນ ມັນຈຶ່ງ ສາມາດກຳນົດໃຫ້ເຫັນໄດ້ກົດເກນຈຳນວນໜຶ່ງ ທີ່ມີລັກສະນະ ກວມລວມ, ສາມາດນຳໃຊ້ເຂົ້າໃນການຜະລິດ ແລະ ແລກປ່ຽນ” (ການ ແລະ ຟຣີດຣິກ, 2002, ໜ້າ 207).

ຟ. ອັງແກນ ກໍ່ໄດ້ຊີ້ແຈງວ່າ: “ວິທີການແຈກຢາຍຜະລິດຕະ ພັນ ຂຶ້ນກັບແບບວິທີການຜະລິດ ແລະ ແລກປ່ຽນ ຂອງສັງຄົມໜຶ່ງທີ່ ແນ່ ນອນໃນປະຫວັດສາດ, ອີງໃສ່ບັນດາປັດຖຶມປັດໄຈປະຫວັດສາດ ຂອງສັງຄົມນັ້ນ, ສະນັ້ນ ການແຈກຢາຍບໍ່ພຽງແຕ່ແມ່ນໝາກຜົນຂອງ ການຜະລິດ ແລະ ແລກປ່ຽນເທົ່ານັ້ນ ມັນຍັງກະທົບກັບຄືນເຖິງການ ຜະລິດ ແລະ ການແລກປ່ຽນ, ຮຽກຮ້ອງໃຫ້ການແຈກຢາຍໃຫ້ສົມຄູ່ ໂດຍຜ່ານການຕໍ່ສູ້ອັນຍາວນານ, ການຜະລິດ ແລະ ແລກປ່ຽນຂະ ຫຍາຍຕົວ ເຮັດໃຫ້ກຳເນີດຂໍ້ຂັດແຍ່ງໃນການແຈກຢາຍ, ການແກ້ໄຂຂໍ້ ຂັດແຍ່ງນັ້ນ ຈະຊຸກຍູ້ແບບວິທີການຜະລິດປັດຈຸບັນ ໄປເຖິງບ່ອນລົ້ມ ລະລາຍ ປ່ຽນແປງດ້ວຍແບບວິທີການຜະລິດໃໝ່” (ການ ແລະ ຟຣີດ ຣິກ, 2002, ໜ້າ 209).

ຕາມຄວາມໝາຍແຄບ ຟ. ອັງແກນ ໄດ້ໃຫ້ທັດສະນະວ່າ: “ເປົ້າ ໝາຍຄົ້ນຄວ້າ ແມ່ນແບບວິທີການຜະລິດທຶນນິຍົມ ແລະ ບັນດາການ ພົວພັນການຜະລິດ ແລະ ແລກປ່ຽນທີ່ສົມຄູ່ກັບແບບວິທີການຜະລິດ ນັ້ນ, ສ່ວນຈຸດປະສົງທ້າຍຂອງນິພົນນັ້ນ ແມ່ນຊອກໃຫ້ເຫັນກົດເກນ ຂັບເຄື່ອນທາງດ້ານເສດຖະກິດ ຂອງສັງຄົມສະໄໝນັ້ນ” (ການ ແລະ ຟຣີດຣິກ, 2002, ໜ້າ 20). ທີ່ໄດ້ໄຈ້ແຍກການກຳເນີດ ແລະ ຂະ ຫຍາຍຕົວ ຂອງແບບວິທີການຜະລິດທຶນນິຍົມ, ຍົກໃຫ້ເຫັນບັນດາ ປັດໄຈທີ່ປະຕິເສດລັດທິທຶນນິຍົມ ແລະ ການກະກຽມບັນດາເງື່ອນໄຂ ໃຫ້ແກ່ການກຳເນີນແບບວິທີການຜະລິດໃໝ່. ສະນັ້ນ, ເສດຖະສາດ ການ ເມືອງ ຄົ້ນຄວ້າກ່ຽວກັບການພົວພັນສັງຄົມຂອງຄົນ ທີ່ກຳເນີດ ຂຶ້ນໃນຂະບວນວິວັດການຜະລິດ ແລະ ຜະລິດສຳວັດຖຸສິ່ງຂອງ ແລະ

ຊີ້ບອກກິດເກນທີ່ດັດສົມການຜະລິດ, ການແຈກຢາຍ, ການແລກປ່ຽນ ແລະ ຊົມໃຊ້ບັນດາວັດຖຸສິ່ງຂອງເຫຼົ່ານັ້ນ ໃນຂະບວນວິວັດທີ່ແນ່ນອນໃດໜຶ່ງ ຂອງການຂະຫຍາຍຕົວສັງຄົມມະນຸດ.

ຟ. ອັງແກນ ໄດ້ໃຫ້ທັດສະນະວ່າ "ສິນຄ້າກ່ອນອື່ນໝົດ ແມ່ນເຄື່ອງໃຊ້ທາງນອກ, ເປັນວັດຖຸໜຶ່ງ ອາໄສມີລັກສະນະຈຳເພາະຂອງມັນ ເຊິ່ງຕອບສະໜອງໄດ້ຄວາມຕ້ອງການປະເພດໃດໜຶ່ງ ຂອງຄົນເຮົາ"(ການ ແລະ ຟຣິດຣິກ, 2013, ໜ້າ 210). ດັ່ງນັ້ນ ສິນຄ້າ ແມ່ນຜະລິດຕະພັນຂອງແຮງງານ ຕອບສະໜອງຄວາມຕ້ອງການຂອງຄົນໂດຍຜ່ານການແລກປ່ຽນຊື້-ຂາຍ ໂດຍເອົາເປັນສື່ກາງ. ດັ່ງນັ້ນ, "ເງິນໃນການຈໍລະຈອນງ່າຍດາຍ ໄດ້ຖືກນຳມາອະທິບາຍ 1) ເງິນແມ່ນໄມ້ຫຼາວັດແທກຄຸນຄ່າ, ພ້ອມກັນນັ້ນ ຢູ່ທີ່ນີ້ຄຸນຄ່າໄດ້ຖືກວັດແທກດ້ວຍເງິນ, ໝາຍວ່າລາຄາກໍ່ໄດ້ມີລັກສະນະການກຳນົດໂດຍກົງກວ່າເກົ່າ; 2) ເງິນແມ່ນພາຫະນະຈໍລະຈອນ ແລະ 3) ເງິນແມ່ນຄວາມເປັນເອກະພາບທັງສອງລັກສະນະການກຳນົດຂ້າງເທິງ, ແມ່ນເງິນຕົວຈິງ, ເປັນຕົວແທນໃຫ້ແກ່ວັດຖຸສິ່ງຂອງທຶນນິຍົມ ທັງໝົດ" (ການ ແລະ ຟຣິດຣິກ, 2013, ໜ້າ 138). ດັ່ງນັ້ນ, ທຶນມີຄວາມໝາຍວ່າ ແມ່ນສິດໃນກຳມະສິດເອກະຊົນ ກ່ຽວກັບຜະລິດຕະພັນແຮງງານຂອງຄົນອື່ນ. "ແຕ່ກ່ອນ ມາຮອດຕຽວນີ້ ພາກເສດຖະສາດການເມືອງ ກໍ່ຍັງສອນໃຫ້ພວກເຮົາວ່າ ແຮງງານເປັນຕົ້ນກຳເນີດຂອງຊັບສິນທັງໝົດ ແລະ ເປັນໄມ້ຫຼາວັດແທກຄຸນຄ່າ, ອັງແກນ ໄດ້ໃຫ້ຂໍ້ສົມມຸດວ່າຜະ ລິດຕະພັນສອງຊະນິດ ໃນເວລາຜະລິດຕ້ອງສິ້ນເປືອງເວລາອອກແຮງງານຄືກັນ ແຕ່ມີຄຸນຄ່າຄືກັນ ແລະ ເວົ້າລວມ ມີພຽງແຕ່ຄຸນຄ່າເທົ່າກັນ ຈຶ່ງສາມາດແລກປ່ຽນນຳກັນໄດ້, ສະນັ້ນ ບັນດາຜະລິດຕະພັນດັ່ງກ່າວກໍ່ຈຳເປັນຕ້ອງມີການແລກປ່ຽນນຳກັນ. ແຕ່ພ້ອມກັນນັ້ນພາກວິຊາເສດຖະສາດການເມືອງ ກໍ່ພັດສອນວ່າມີແຮງງານສະສົມພິເສດປະເພດໜຶ່ງ ທີ່ຄະນະວິຊາດັ່ງກ່າວເອີ້ນວ່າ ທຶນ" (ການ ແລະ ຟຣິດຣິກ, 2013, ໜ້າ 707). ມາຮອດປັດຈຸບັນ, ພາກວິຊາເສດຖະ ສາດການເມືອງ ກໍ່ຍັງສອນໃຫ້ພວກເຮົາວ່າ ແຮງງານເປັນຕົ້ນກຳເນີດ ຂອງຊັບສິນທັງໝົດ ແລະ ເປັນໄມ້ຫຼາວັດແທກຄຸນຄ່າ.

ຟ. ອັງແກນ ໄດ້ໃຫ້ທັດສະນະກ່ຽວກັບຮອບວຽນຂອງທຶນວ່າ: "ຮອບໝຸນວຽນທັງສອງນັ້ນ ລ້ວນແຕ່ແບ່ງອອກເປັນສອງໄລຍະກົງກັນຂ້າມທີ່ຄືກັບ: ສ-ງ (ໝາຍເຖິງການຂາຍ ແລະ ງ-ສ ໝາຍເຖິງການຊື້. ໃນແຕ່ລະໄລຍະນັ້ນ ອັນທີ່ຢືນຢູ່ເຊິ່ງໜ້າກັນ ກໍ່ຍັງແມ່ນສອງປັດໄຈວັດຖຸອັນນັ້ນ). ສິນຄ້າ ແລະ ເງິນຕາ ສອງຕົວລະຄອນກໍ່ສວມໜ້າກາກເສດຖະກິດ ມີສັນຍະລັກຄືກັນ ຜູ້ຊື້ ແລະ ຜູ້ຂາຍ" (ການ ແລະ ຟຣິດຣິກ, 2013, ໜ້າ 309). ແຕ່ລະຮອບໝຸນວຽນຂອງການໝຸນວຽນນັ້ນ ແມ່ນຄວາມເປັນເອກະພາບ ຂອງບັນດາໄລຍະກົງກັນ ຂ້າມກັນນັ້ນ ແລະ ທັງສອງເທື່ອຂອງຄວາມເປັນເອກະພາບນັ້ນ ລ້ວນແຕ່ໄດ້ປະຕິບັດຜ່ານການເຂົ້າຮ່ວມເຊັນສັນຍາ ຂອງທັງສາມຝ່າຍ, ໃນຈຳນວນນັ້ນ ຜູ້ໜຶ່ງມີແຕ່ຂາຍ, ຜູ້ໜຶ່ງມີແຕ່ຊື້ເທົ່ານັ້ນ, ສ່ວນຜູ້ທີ່ສາມແມ່ນຊື້ ແລະ ຂາຍຕາມລຳດັບ. ທິດສະດີກ່ຽວກັບການແບ່ງຄຸນຄ່າ ສ່ວນເກີນອອກເປັນດອກເບ້ຍ, ກຳໄລການຄ້າ ແລະ ຄ່າເຊົ່າດິນ. "ຄ່າເຊົ່າທີ່ດິນແມ່ນສິດ ຂອງພວກທີ່ກຳມະສິດທີ່ດິນ ມີຕົ້ນກຳເນີດຈາກການຢຶດຈອງ, ຍາດຊີງເອົາ. ບັນດາເຈົ້າທີ່ດິນ ກໍ່ຄືໝົດທຸກຄົນ ລ້ວນແຕ່ຢາກເກັບກ່ຽວເອົາຜົນຢູ່ບ່ອນທີ່ເຂົາບໍ່ໄດ້ຫວ່ານແນວປູກ ແລະ ຮຽກຮ້ອງຄ່າເຊົ່າ ນັບທັງຜະລິດຕະພັນທຳມະຊາດຂອງດິນດອນ" (ການ ແລະ ຟຣິດຣິກ, 2010, ໜ້າ 184), ຜູ້ທີ່ເປັນເຈົ້າທີ່ດິນຮຽກຮ້ອງເກັບຄ່າເຊົ່າ ນັບທັງທີ່ດິນທີ່ບໍ່ໄດ້ບຸກເບີກປັບປຸງ ແລະ ທັງອັນທີ່ເພີ່ນອາດຈະຖືວ່າເປັນດອກເບ້ຍ ຫຼື ກຳໄລຂອງລາຍຈ່າຍປັບປຸງດິນ, ໃນຫຼາຍກໍລະນີ ມັນແມ່ນຈຳນວນບວກຕື່ມໃສ່ຄ່າເຊົ່າດິນໃນເບື້ອງຕົ້ນເທົ່ານັ້ນ.

"ຄ່າເຊົ່າທີ່ດິນ ອາດຈະຖືຄ່າເຊົ່າດິນເປັນຜະລິດຕະພັນ ຂອງບັນ ດາກຳລັງທຳມະຊາດ, ເຊິ່ງເປັນກຳມະສິດມອບໃຫ້ຜູ້ເຊົ່າຢືມໃຊ້, ຜະລິດ ຕະພັນນັ້ນຫຼາຍຫຼືໜ້ອຍແມ່ນຂຶ້ນກັບຂະໜາດຂອງບັນດາກຳ ລັງທຳມະຊາດທີ່ສົມຄູ່, ກວ້າງແຄບຮອດໃສ, ເວົ້າແບບອື່ນແມ່ນຂຶ້ນ ກັບວ່າດິນຕອນນັ້ນ ມີຄວາມງອກງາມໂດຍທຳມະຊາດ ແລະ ການ ປັບປຸງຫຼາຍ ຫຼືໜ້ອຍ. ນັ້ນແມ່ນຜະລິດຕະພັນທີ່ຍັງເຫຼືອ ພາຍຫຼັງທີ່ຫັກ ຫຼື ສະຫຼຸບບັນຊີທັງໝົດ ອັນໃດທີ່ຖືວ່າແມ່ນຜະລິດຕະພັນທີ່ຄົນເຮັດອອກມາ" (ການ ແລະ ຟຣິດຣິກ, 2010, ໜ້າ 185). ດັ່ງນັ້ນ, ຄ່າເຊົ່າທີ່ດິນຖືຄືລາຄາທີ່ຕ້ອງຈ່າຍ ເພື່ອແລກເອົາສິດການນຳໃຊ້ດິນດອນ, ແມ່ນລາຄາຜູກຂາດ. ປະລິມານຄ່າເຊົ່າທີ່ດິນ ແມ່ນຂຶ້ນກັບລະດັບຄວາມດຸດິມສົມ ບູນຂອງດິນນາ.

III. ການໝຸນໃຊ້ແນວຄິດທິດສະດີເສດຖະສາດການເມືອງ ຂອງ ຟຣິດຣິກ ອັງແກນ ເຂົ້າໃນການພັດທະນາເສດຖະກິດ ຢູ່ປະເທດເຮົາ ໃນໄລຍະຜ່ານມາ.

ຄຳວ່າ: ເສດຖະກິດແມ່ນການຜະລິດ, ການຊົມໃຊ້, ການພົວພັນແລກປ່ຽນສິນຄ້າ ແລະ ບໍລິການ ລະຫວ່າງ ບຸກຄົນ, ສັງຄົມ ແລະ ປະເທດ. ໃນການປະຕິບັດຕົວຈິງ ໃນການນຳໃຊ້ປັດໄຈການຜະລິດ ແມ່ນການນຳໃຊ້ຊັບພະຍາກອນທີ່ມີຈຳກັດຢ່າງປະຢັດ ເພື່ອຜະລິດສິນຄ້າແລະ ບໍລິການ ຮັບໃຊ້ສັງຄົມຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ການພັດທະນາເສດຖະກິດ ແມ່ນຂະບວນການໜຶ່ງທີ່ພາໃຫ້ເກີດ

ຄວາມຈະເລີນທາງດ້ານເສດຖະກິດຢ່າງສະໝ່ຳສະເໝີ ແລະ ເປັນ ເວລາຍາວນານ, ແມ່ນຂະບວນການປັບປຸງ ແລະ ປ່ຽນແປງການ ດຳເນີນການຜະລິດສິນຄ້າ ແລະ ບໍລິການຕ່າງໆ ຂອງບັນດາຫົວ ໜ່ວຍເສດຖະກິດທີ່ມີການຈັດຕັ້ງການຜະລິດທຸລະກິດ, ມີການຄຸ້ມ ຄອງບໍລິຫານດຳເນີນທຸລະກິດຜະລິດສິນຄ້າ ແລະ ບໍລິການ ໃຫ້ນັບ ມື້ນັບດີຂຶ້ນໄປເລື້ອຍໆ ທັງໃນດ້ານປະລິມານ ແລະ ຄຸນນະພາບ ໃນ ຂະບວນການຜະລິດ, ໂດຍອາໄສຜົນສຳເລັດ ແລະ ຄວາມກ້າວໜ້າ ທາງດ້ານການຄົ້ນຄວ້າວິທະຍາ ສາດ-ເຕັກໂນໂລຊີ ແລະ ການ ພັດທະນາລະບົບຂໍ້ມູນຂ່າວສານທີ່ທັນສະໄໝ, ຈຳເປັນຕ້ອງມີການ ນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດໃນການເຊື່ອມໂຍງ ເສດຖະກິດກັບຕ່າງປະເທດ ເຂົ້າມາຊ່ວຍພັດທະ ນາບັນດາວິສາຫະ ກິດ ໃນການຜະລິດສິນຄ້າ ໂດຍການນຳໃຊ້ງົບປະ ມານເງິນທຶນ, ແຮງງານ ແລະ ຊັບພະຍາກອນທຳມະຊາດ ເຂົ້າສູ່ການຜະລິດທີ່ມີ ລັກສະນະສະເພາະ ຂອງການຜະລິດສິນຄ້າ ແລະ ບໍລິການ ຂອງລະ ບົບເສດຖະກິດ ໃຫ້ສາມາດຮັບປະກັນທາງດ້ານປະລິມານແລະ ຄຸນ ນະພາບດີຂຶ້ນ.

ໃນສະໄໝຂ້າມຜ່ານກ່ອນການປ່ຽນແປງໃໝ່, ເສດຖະສາດ ການເມືອງຕົ້ນຕຳຖ່າຍທອດບັນດາຜົນການຄົ້ນຄວ້າ ຂອງນັກຄົ້ນຄວ້າ ໂຊວຽດ ແລະ ສສ ຫວຽດນາມ ໂດຍພື້ນຖານ, ເນື້ອໃນຂອງເສດຖະ ສາດການເມືອງ ປະກອບດ້ວຍ 2 ພາກ: ແບບວິທີການຜະລິດທຶນ ນິຍົມ ແລະ ສະໄໝຂ້າມຜ່ານ ກ້າວຂຶ້ນສັງຄົມນິຍົມຢູ່ ສປປ ລາວ. ໃນນັ້ນ, ເປົ້າໝາຍຄົ້ນຄວ້າລັດທິທຶນນິຍົມ ສຸມໃສ່ເຮັດໃຫ້ແຈ້ງຫາດ ແທ້ຊຸດຮີດ ຂອງການພົວພັນການຜະລິດທຶນນິຍົມ, ອະທິບາຍການ ຮັບໃຊ້ໃຫ້ແກ່ການລົບລ້າງການພົວພັນສິນຄ້າເງິນຕາ, ລົບລ້າງກຳມະ ສິດຂອງເອກະຊົນ, ລົບລ້າງການພົວພັນຕະຫຼາດໃນໄລຍະຂ້າມຜ່ານ ກ້າວຂຶ້ນສັງຄົມນິຍົມ. ດ້ວຍຄວາມມຸ່ງຫວັງເຮັດແນວໃດໃຫ້ໄລຍະ ຂ້າມຜ່ານສຳເລັດລົງໂດຍໄວ, ບັນຫາຜົນການຄົ້ນຄວ້າກໍຄືບົດບັນລະ ຍາຍເສດຖະສາດການເມືອງ, ຂາດການເອົາໃຈໃສ່ເຖິງບັນດາປັດໄຈ ພາວະວິໄສ, ຄວາມສອດຄ່ອງ, ເໝາະສົມ ແລະ ເອກະລັກ ຂອງບາດ ກ້າວຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ຢູ່ ສປປ ລາວ. ສະນັ້ນ, ເສດຖະ ສາດການເມືອງໄລຍະນີ້, ເຖິງວ່າມີຄຸນຄ່າໃຫຍ່ຫຼວງໃນດ້ານປະຫວັດ ສາດ, ແຕ່ກໍ່ບໍ່ສ້າງໄດ້ພື້ນຖານວິທະຍາສາດ ກ່ຽວກັບທິດສະດີເສດ ຖະ ສາດການເມືອງ ທີ່ແໜ້ນແກ່ນໃຫ້ແກ່ການຂ້າມຜ່ານລະບອບ ທຶນນິຍົມ ຢູ່ ສປປ ລາວ. ກ້າວເຂົ້າສູ່ໄລຍະປ່ຽນແປງໃໝ່, ນັບແຕ່ປີ 1986 ເຖິງປັດຈຸບັນ, ຈິນຕະນາການໃໝ່ ໄດ້ສະແດງໃຫ້ເຫັນຢ່າງ ຈະແຈ້ງໃນການສະເໜີ, ຂະຫຍາຍເສດຖະສາດການເມືອງຢູ່ປະເທດ ເຮົາ, ເຖິງວ່າເນື້ອໃນ ຍັງປະກອບດ້ວຍແບບວິທີການການຜະລິດທຶນ ນິຍົມ ໃນໄລຍະຂ້າມຜ່ານກ້າວຂຶ້ນສູ່ສັງຄົມນິຍົມ ແລະ ການຂະ ຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ໃນເນື້ອໃນຂອງເສດຖະສາດການເມືອງ ກ່ຽວກັບໄລຍະຂ້າມ ຜ່ານກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາ ໄດ້ຄ່ອຍໆດັດປັບແນວຄິດ ອັດຕະວິໄສ, ເຈດຈຳນົງ ແລະ ການສືບທອດແບບກົນຈັກໃນການ ຄົ້ນຄວ້າ. ສະນັ້ນ, ຄຽງຄູ່ກັບການສືບຕໍ່ຂຸດຄົ້ນລົງເລິກຄົ້ນຄວ້າບັນຫາ ທີ່ມີລັກສະນະກົດເກນລວມ ຂອງເສັ້ນທາງກ້າວຂຶ້ນສັງຄົມນິຍົມ ອາໄສການປ່ຽນແປງໃໝ່ຈິນຕະນາການດ້ານທິດສະດີນັ້ນ, ເສດ ຖະ ສາດການເມືອງ ຂອງ ຟ. ອັງແກນ ໄດ້ກຳນົດ ແລະ ການວິເຄາະຈະ ແຈ້ງບັນດາບັນຫາ ກ່ຽວກັບເກນຫຼັກເສດຖະສາດການເມືອງ ຄື: ບາດ ກ້າວ, ທາດແທ້, ເສັ້ນທາງກ້າວຂຶ້ນສັງຄົມນິຍົມ ຂ້າມຜ່ານລະບອບທຶນ ນິຍົມ, ຫັນເປັນລະອຽດກ່ຽວກັບກຳມະສິດ, ພາກສ່ວນເສດຖະກິດ, ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ ຕິດພັນກັບການພັດທະນາ ເສດຖະກິດພູມປັນຍາ ກຳນົດເສດຖະກິດຕະຫຼາດ, ໄປປຕາມທິດສັງ ຄົມນິຍົມ ແລະ ບັນດາເຄື່ອງມືທີ່ລັດສັງຄົມນິຍົມ ຢູ່ ສປປ ລາວ ຕ້ອງ ໄດ້ໝູນໃຊ້ເພື່ອດັດສົມການພັດທະນາເສດຖະກິດ-ສັງຄົມ. ຍ້ອນແນວ ນັ້ນ, ມາຮອດປັດຈຸບັນ ສາມາດສ້າງໄດ້ບາດກ້າວເບື້ອງຕົ້ນດ້ານພື້ນ ຖານວິທະຍາສາດ ໃຫ້ແກ່ການນຳເອົາເສດຖະສາດການເມືອງ ເຂົ້າໃນ ການກຳນົດແນວທາງ, ແຜນນະໂຍບາຍເສດຖະກິດ ຂອງພັກ ແລະ ລັດ ເຮົາ ໃນໄລຍະປ່ຽນແປງໃໝ່. ຈຸດປະສົງດ້ານທິດສະດີແກນຫຼັກ ຂອງ ເສດຖະສາດການເມືອງ ຂອງ ຟ. ອັງແກນ ແມ່ນແນໃສ່ແຊກຊຶມເຂົ້າ ໃສ່ທາດແທ້ບັນດາປາກົດການເສດຖະກິດ ເພື່ອຊອກໃຫ້ເຫັນບັນດາ ກົດເກນ, ລັກສະນະກົດເກນໃນເສດຖະກິດ ແລະ ການກະທົບຂອງ ມັນ, ແນໃສ່ຈຸດປະສົງໝູນໃຊ້ເຂົ້າໃນພຶດຕິກຳ ໃຫ້ມີປະສິດທິຜົນ.

ຈຸດປະສົງດ້ານພຶດຕິກຳຂອງເສດຖະສາດການເມືອງຂອງ ຟ. ອັງແກນ ແມ່ນຊອກຄົ້ນຫາບັນດາກຳລັງແຮງທີ່ຊຸກດັນໂດຍກົງ, ປົດ ປ່ອຍທຸກເງື່ອນໄຂ ເພື່ອໃຫ້ການຜະລິດຂະຫຍາຍຕົວ, ຊອກຫາບັນດາ ພາຫະ ນະທີ່ສ້າງກຳລັງດັນນັ້ນ, ບົນພື້ນຖານນັ້ນ ກຳນົດການພົວພັນ ຜົນປະ ໂຫຍດ ແລະ ແກ້ໄຂຢ່າງກົມກຽວບັນດາການພົວພັນຜົນ ປະໂຫຍດ ໃນຂະບວນວິວັດການຂະຫຍາຍຕົວ, ຜ່ານບັນດາຂະບວນ ວິວັດນີ້ ຊຸກຍູ້ຄວາມສີວິໄລທາງດ້ານສັງຄົມ. ກົດເກນເສດຖະກິດທີ່ ສະແດງໃຫ້ເຫັນການພົວພັນທາດແທ້, ປົກກະຕິ, ຊ້ຳໄປຊ້ຳມາ ແລະ ຂຶ້ນກັບເຊິ່ງກັນ ແລະກັນ ລະຫວ່າງ ບັນດາປາກົດການ ແລະ ຂະບວນ ວິວັດເສດຖະກິດ. ບັນດາກົດເກນເສດຖະກິດ ມີລັກສະນະພາວະວິໄສ , ບໍ່ຂຶ້ນກັບເຈດຈຳນົງ ແລະ ຄວາມຮັບຮູ້ຂອງຄົນເຮົາ. ຕ່າງກັບກົດເກນ

ທຳມະຊາດ, ກົດເກນເສດຖະກິດ ແມ່ນຜົນຂອງການເຄື່ອນໄຫວໃນສັງຄົມ, ມັນຈະປະກົດໃນເສດຖະກິດຂອງຄົນເຮົາ. ມີບາງກົດເກນຄົງຕົວໃນທຸກແບບວິທີການຜະລິດ ເອີ້ນວ່າ ກົດເກນລວມ ຄື: ກົດເກນຄວາມສອດຄ່ອງ ລະຫວ່າງ ການພົວພັນການຜະລິດ ກັບ ລະດັບຂອງກຳລັງການຜະລິດ, ກົດເກນປະຢັດເວລາ, ກົດເກນຍົກສູງ ຄວາມຕ້ອງການ... ມີບັນດາກົດເກນເສດຖະກິດ ມີແຕ່ກະທົບໃນ ບາງຮູບຖານເສດຖະກິດ-ສັງຄົມແນ່ນອນ ຄືກົດເກນຄຸນຄ່າ, ກົດເກນຈໍລະຈອນສິນຄ້າເງິນຕາ... ນັ້ນແມ່ນກົດເກນພິເສດລວມໃຫ້ ບາງແບບວິທີການຜະລິດແນ່ນອນ. ເນື່ອງຈາກການພົວພັນການ ຜະລິດ ມີການປ່ຽນແປງໄປພ້ອມກັບການກ້າວໜ້າ ຂອງກຳລັງການ ຜະລິດ ເຮັດໃຫ້ກົດເກນເສດຖະກິດທີ່ສະແດງໃຫ້ຫາດແທ້ ຂອງ ການພົວພັນການຜະລິດ ສ່ວນຫຼາຍຈະຄົງຕົວ ແລະກະທົບໃນຂອບ ເຂດແບບວິທີການຜະລິດອັນແນ່ນອນ ເອີ້ນວ່າ ກົດ ເກນເສດຖະກິດ ສະເພາະ.

ຄົ້ນຄວ້າເສດຖະກິດການເມືອງຂອງ ຟ. ອັງແກນ ໄດ້ສະໜອງ ວິທີວິທະຍາວິທະຍາສາດ ໃຫ້ການສ້າງບັນດານະໂຍບາຍເສດຖະກິດ ພາຍໃນ ກໍ່ຄືການເຊື່ອມໂຍງກັບສາກົນໃນສະພາບການໂລກ ມີການ ປ່ຽນແປງ. ໃນຖານະແມ່ນວິທະຍາສາດ ກ່ຽວກັບການພົວພັນສັງຄົມ ໃນການຜະລິດສັງຄົມ, ເສດຖະສາດການເມືອງ ຂອງ ຟ. ອັງແກນ ສະໜອງວິທີວິທະຍາວິທະຍາສາດ ໃຫ້ຖົນແຖວພະນັກງານນຳພາ, ຄຸ້ມຄອງ ໃນການຮັບປະກັນການປະສົມກົມກຽວບັນດາການພົວພັນ ຜົນປະໂຫຍດ ໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດ ເຮົາ, ກຳແໜ້ນ ແລະ ໝູນໃຊ້ຢ່າງປະດິດສ້າງຄວາມຮັບຮູ້ ເສດຖະສາດການ ເມືອງ ແມ່ນເງື່ອນໄຂຈຳເປັນ ເພື່ອກຳນົດແນວທາງ ການພັດທະນາເສດຖະກິດ ຢູ່ປະເທດເຮົາໃນສະພາບການໃໝ່ຢ່າງ ຖືກຕ້ອງ. ບັນດາແນວທາງນະໂຍບາຍຂອງພັກ ຕໍ່ກັບເສດຖະກິດ ໄດ້ ຮັບການຈັດຕັ້ງປະຕິບັດ, ບົນພື້ນຖານນັ້ນ ໄດ້ນຳເອົາໄຊຊະນະອັນ ຍິ່ງໃຫຍ່ມາໃຫ້ປະ ເທດຊາດ ຜ່ານການເຄື່ອນໄຫວໃນພຶດຕິກຳຂອງ ພັກ, ຈາກບົດຮຽນໃນພຶດຕິກຳ ພາໃຫ້ມີການປ່ຽນແປງໃໝ່ ທັນຈາກ ເສດຖະກິດແຜນ ການລວມສູນ, ບໍລິຫານເກື້ອກູນ ໄປສູ່ກົນໄກ ຕະຫຼາດ, ຟື້ນຟູ ແລະສ້າງຄວາມສະດວກ ໃຫ້ການຂະຫຍາຍ ພື້ນຖານເສດຖະກິດຫຼາຍພາກ ສ່ວນ; ສ້າງ ແລະ ຂະຫຍາຍ ເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ, ກຳນົດແບບວິທີທັນເປັນ ອຸດສາຫະກຳ, ທັນເປັນທັນສະໄໝ ຕິດພັນກັບເສດຖະກິດພູມ ປັນຍາ ນັບມື້ນັບບໍລິບູນຍິ່ງຂຶ້ນ.

ໃນເງື່ອນໄຂປັດຈຸບັນນີ້, ພຶດຕິກຳຂອງປະເທດເຮົາ ໄດ້ມີການ ປ່ຽນແປງ, ຍິ່ງເຮັດໃຫ້ມີຫຼາຍບັນຫາຕ້ອງໄດ້ຄົ້ນຄວ້າ, ແກ້ໄຂ. ດັ່ງນັ້ນ, ຄວາມຄິດເຫັນຂອງ ຟ. ອັງແກນ ທີ່ກ່າວມາຂ້າງເທິງ ຈຶ່ງກາຍເປັນຂໍ້ ແນະນຳທີ່ສຳຄັນ ຕໍ່ກັບຜູ້ເຮັດວຽກງານຄົ້ນຄວ້າທິດສະດີ. ປະ ຕິບັດ ຕາມຄຳແນະນຳດັ່ງກ່າວນັ້ນ ວຽກງານຄົ້ນຄວ້າທິດສະດີຕ້ອງມີການ ປ່ຽນແປງໃໝ່ ແລະ ກ້າວຂຶ້ນ ເພື່ອຕອບສະໜອງຄວາມຮຽກ ຮ້ອງ ຕ້ອງການຂອງພຶດຕິກຳ, ສະນັ້ນ ພັກເຮົາເອົາໃຈໃສ່ໝູນໃຊ້ແນວຄິດ ເສດຖະສາດການເມືອງ ຂອງ ອັງແກນ ກໍ່ຄືທິດສະດີເສດຖະສາດ ການເມືອງ ຂອງມາກ ເຂົ້າໃນພຶດຕິກຳ ໂດຍເຫັນແຈ້ງຜ່ານທັດສະນະ ພື້ນຖານດັ່ງນີ້:

1). “ສືບຕໍ່ຢຶດໝັ້ນເອົາການພັດທະນາເສດຖະກິດ ເປັນໃຈກາງ , ສ້າງເງື່ອນໄຂອຳນວຍໃຫ້ກຳລັງການຜະລິດຂະຫຍາຍຕົວຢ່າງ ແຂງແຮງ, ທັນປ່ຽນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ, ສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໃຫ້ສົມບູນຍິ່ງໆຂຶ້ນ ເທື່ອລະກ້າວ; ການພັດທະນາ ແມ່ນຄວາມຈຳເປັນອັນດັບໜຶ່ງ ແລະ ເປັນໜ້າທີ່ປະຫວັດສາດໃນຍຸກສະໄໝ ຂອງພັກ ແລະ ລັດເຮົາ ທັງ ເປັນ ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ຂອງທົ່ວປວງຊົນລາວ ເຮົາ ເພາະວ່າການພັດທະນາປະສົບຜົນສຳເລັດ ຈຶ່ງເຮັດໃຫ້ຄະນະພັກ ກຳອຳ ນາດມີຄວາມໝັ້ນຄົງ, ຈຶ່ງເສີມຂະຫຍາຍລັກສະນະດີເລີດ ຂອງ ລະບອບປະຊາທິປະໄຕປະຊາຊົນ ໄດ້ ແລະ ເຮັດໃຫ້ຄວາມປາຖະໜາ ທີ່ວ່າ: ຕາມເສັ້ນທາງເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດມັ່ງຄັ່ງ ເຂັ້ມແຂງ, ສັງ ຄົມມີຄວາມສາມັກຄີປອງດອງ, ມີປະຊາທິປະໄຕຍຸຕິ ທຳ ແລະ ສີວິໄລ”(ຄະນະໂຄສະນາອົບຮົມສູນກາງພັກ, 2006, ໜ້າ 44).

2). ສຸມໃສ່ແກ້ຄວາມທຸກຍາກ ຂອງປະຊາຊົນ ໃຫ້ໄດ້ໂດຍພື້ນ ຖານ ດ້ວຍມາດຕະການສົ່ງເສີມການຜະລິດເປັນສິນຄ້າ ແລະ ພັດທະນາຊົນນະບົດ, ພັກເຮົາ ຖືການແກ້ໄຂຄວາມທຸກຍາກ, ການສ້າງ ຄວາມຢູ່ດີຂອງຄອບຄົວ ແລະ ການພັດທະນາຊົນນະບົດ ເປັນໜ້າທີ່ ຈຸດສຸມກວມລວມໃນສະເພາະໜ້າ ແລະ ຍາວນານ ເຊິ່ງທຸກຂະແໜ ງການທັງສູນກາງ ແລະ ທ້ອງຖິ່ນ ຕ້ອງເຂົ້າຮ່ວມດ້ວຍຄວາມ ຮັບຜິດຊອບສູງ. ອັນສຳຄັນຮີບດ່ວນໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນລາວບັນດາ ເຜົ່ານັ້ນ “ແມ່ນການກໍ່ສ້າງຂະຫຍາຍ ພື້ນຖານໂຄງລ່າງ ເພື່ອຮັບໃຊ້ການຜະລິດ-ຊີວິດການເປັນຢູ່ ຕິດພັນ ກັບການໃຫ້ຄວາມຮູ້ແກ່ປະ ຊາຊົນ ເປັນຕົ້ນແມ່ນ ຄວາມຮູ້ກ່ຽວກັບ ການຜະລິດກະສິກຳ (ການປູກຝັງ, ການລ້ຽງສັດ) ເປັນສິນຄ້າ” (ອາລະ ສານອາລຸນໃໝ່, 2011, ໜ້າ 29-30).

3). ປະຕິບັດຍຸດທະສາດທັນເປັນອຸດສາຫະກຳ ແລະ ທັນເປັນ

ທັນສະໄໝ, ຈັດສັນ ແລະ ນຳໃຊ້ແຫຼ່ງຊັບພະຍາກອນໃຫ້ມີປະສິດທິຜົນສູງ, ແມ່ນສິ່ງທີ່ຕ້ອງເປັນໄປ ທັງໜ້າທີ່ສະເພາະ ແລະ ຍາວນານ ຢູ່ປະເທດເຮົານັ້ນ ຕ້ອງດຳເນີນດ້ວຍບາດກ້າວອັນເໝາະສົມ ໂດຍເລີ່ມຈາກຂະແໜງການ ແລະ ບໍລິເວນເຂດແຄວ້ນທີ່ພວກເຮົາມີເງື່ອນໄຂຄວາມສາມາດ ແລະ ມີທ່າແຮງເຮັດໄດ້ ທັງຕ້ອງມີການປະສົມປະສານອັນເປັນມູນເຊື້ອ ກັບອັນທັນສະໄໝ ດຳເນີນໂຄງການຂະໜາດນ້ອຍ, ກາງ ແລະ ໃຫຍ່ ໄປຄຽງຄູ່ກັນການເປັນອຸດສາຫະກຳ, ທັນເປັນທັນສະໄໝ, ເລັ່ງທ່ວງໃຫ້ເຮົາຕ້ອງທັນການ ຜະລິດ, ການບໍລິການ ເຂົ້າສູ່ລວງເລິກ, ລວງກວ້າງ, ຍົກສູງ ສະມັດຕະພາບ ແລະ ຄຸນນະພາບເປັນຕົ້ນຕໍ ທັງມີການປະຢັດ ມັດຖະຍັດວັດຖຸດິບ ແລະ ພະລັງງານ; ສົ່ງເສີມການປະດິດສ້າງໃໝ່ ແລະ ການນຳໃຊ້ວິທະຍາການໃໝ່ທີ່ຈຳກັດມົນລະພິດເປັນມິດກັບສິ່ງແວດລ້ອມ ແລະ ສັງຄົມ; ທັງຊ່ວຍສ້າງຄວາມໝັ້ນຄົງ ຂອງມະນຸດ ແລະ ເຮັດໃຫ້ການພັດທະນາ ມີຄວາມຍືນຍົງ.

ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ດຳເນີນພາຍໃຕ້ແນວຄິດຊີ້ນຳກວມລວມ ພາຍໃຕ້ຄຳຂວັນ “ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ, ເພີ່ມທະວີມະຫາສາມັກຄີທົ່ວປວງຊົນທັງຊາດ, ຢຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມທິດຍືນຍົງ ສູ່ຈຸດໝາຍສັງຄົມນິຍົມ ຢ່າງໜັກແໜ້ນໃນຕໍ່ໜ້າ “ຕ້ອງຢຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ ຢ່າງເດັດດ່ຽວໝຽວແໜ້ນ, ສືບຕໍ່ຂະຫຍາຍແນວຄິດປະດິດສ້າງ ບົນພື້ນຖານແຫ່ງການຢຶດໝັ້ນຈຸດໝາຍສັງຄົມນິຍົມ ແລະ ຄວາມເອກະລາດແຫ່ງຊາດ, ໝູນໃຊ້ ແລະ ຂະຫຍາຍທິດສະດີມາກ-ເລນິນ, ແນວຄວາມຄິດ ໄກສອນ ພົມວິຫານ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ ສົມທົບກັບການຮັບເອົາສິ່ງຍອດຍິ່ງ ຂອງມວນມະນຸດ” (ວາລະສານອາລຸນໃໝ່, 2016, ໜ້າ 30).

ເພື່ອປະຕິບັດແນວທາງເສດຖະກິດຂອງພັກ ຢ່າງຖືກຕ້ອງ, ມີຄວາມຍືນຍົງ, ທັງມີຄວາມສອດຄ່ອງກັບທ່າອ່ຽງການພັດທະນາເສດຖະກິດໃນພາກພື້ນ ແລະ ສາກົນ, ໃນກອງກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ ໄດ້ສືບຕໍ່ໃຫ້ທັດສະນະວ່າ: “ເພີ່ມທະວີການຄຸ້ມຄອງເສດຖະກິດມະຫາພາກ ໃຫ້ມີຄວາມເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ ໂດຍເອົາບັນຫາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ນັບທັງການປະຢັດຕ້ານການຟຸ່ມເຟືອຍ” (ວາລະສານອາລຸນໃໝ່, 2021, ໜ້າ 134). ຈຸດພິເສດການພັດທະ ນາເສດຖະກິດ ຢູ່ປະເທດເຮົາ, ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ທີ່ຢູ່ລະດັບ 4% ເນື່ອງຈາກມີການລະບາດ ຂອງພະຍາດໂຄວິດ-19 ໃນຮອບໃໝ່ ແຕ່ເດືອນ ເມສາ 2021 ແກ່ຍາວມາເຖິງທ້າຍປີ 2021 ໄດ້ສົ່ງຜົນໃຫ້ຂະແໜງບໍລິການ ບໍ່ສາມາດຟື້ນຕົວໄດ້ຕາມຄາດໝາຍທີ່ຕັ້ງໄວ້”

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມກາງສະໄໝ (2021-2023) ເສດຖະກິດໄດ້ຂະຫຍາຍຕົວສະເລ່ຍໃນລະດັບ 4.03% (ແຜນການ 5 ປີ: ສະເລ່ຍໃນລະດັບ 4% ຂຶ້ນໄປ), ໃນນີ້: ປີ 2021 ຂະຫຍາຍຕົວ 3.5%, ປີ 2022 ບັນລຸໄດ້ 4.4% ແລະ ປີ 2023 ບັນລຸໄດ້ 4.5%. ລວມຍອດຜະລິດຕະພັນພາຍໃນ (GDP) ຕາມລາຄາໃນປີ: ໃນໄລຍະ 3 ປີ ຄາດວ່າຈະປະຕິບັດໄດ້ 658,063.30 ຕື້ກີບ ເທົ່າກັບ 49,12% ຂອງແຜນການ (ແຜນການ 5 ປີ: 1,056,692 ຕື້ກີບ), ໃນນີ້ປີ 2021 ເທົ່າກັບ 184,982 ຕື້ກີບ, ປີ 2022 ເທົ່າກັບ 215,609.30 ຕື້ກີບ, ໃນ 6 ເດືອນຕົ້ນປີ 2023 ເທົ່າກັບ 118,467 ຕື້ກີບ ແລະ ຄາດວ່າໝົດປີ 2023 ຈະປະຕິບັດໄດ້ 257.472 ຕື້ກີບ. ເຖິງຢ່າງໃດກໍ່ຕາມ, ຍ້ອນການອ່ອນຄ່າຂອງເງິນກີບເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ມີທ່າອ່ຽງຫຼຸດລົງ ຄື: ປີ 2021 ປະຕິບັດໄດ້ 2,595 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 2,022 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1,824 ໂດລາສະຫະລັດ (ແຜນການ 5 ປີ: ໃຫ້ໄດ້ 2.880 ໂດລາສະຫະລັດ); ລາຍໄດ້ຕໍ່ຫົວຄົນ (GNI) ປີ 2021 ປະຕິບັດໄດ້ 2,452 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 1,901 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1,712 ໂດລາ ສະຫະລັດ (ແຜນການ 5 ປີ: ໃຫ້ໄດ້ 2.280 ໂດລາສະຫະລັດ) (ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, 2021, ໜ້າ 3-4).

ສັງລວມແລ້ວ, ເຖິງວ່າຈະມີຄວາມຫຍຸ້ງຍາກດ້ານຕ່າງໆ ແຕ່ດ້ວຍຄວາມພະຍາຍາມຂອງພັກ ແລະ ລັດຖະບານ ໃນການອອກບັນດາມາດຕະການ ເພື່ອຊຸກຍູ້ການຜະລິດ ແລະ ການບໍລິການ ໃຫ້ສືບຕໍ່ຂະ ຫຍາຍຕົວ ເປັນຕົ້ນ: ການເປີດປະເທດຄືນໃໝ່, ການຊຸກຍູ້ການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການ ຈັດຕັ້ງປະຕິບັດໂຄງການທົດລອງແຮ່ທາດ ລວມທັງໂຄງການຂະໜາດໃຫຍ່ຈຳນວນໜຶ່ງ ແລະ ການຊຸກຍູ້ການທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ການສະໜອງສິນເຊື່ອ ເພື່ອຟື້ນຟູເສດຖະກິດ ແລະອື່ນໆ ຈຶ່ງໄດ້ເຮັດໃຫ້ເສດຖະກິດ ສາມາດສືບຕໍ່ຂະຫຍາຍຕົວຢູ່ໃນກອບຂອງແຜນການ 5 ປີ ກຳນົດໄວ້ (4% ຂຶ້ນໄປ), ຄຽງຄູ່ກັບຜົນສຳເລັດທີ່ຍາດມາໄດ້ ກໍ່ເຫັນວ່າໃນປີ 2021 ອັດຕາການເຕີບໂຕແມ່ນບໍ່ສາມາດບັນລຸຕາມຄາດໝາຍຂອງແຜນການປີ ຍ້ອນໄດ້

ຮັບຜົນກະທົບໜັກໜ່ວງຈາກການແຜ່ລະບາດພະຍາດ ໂຄວິດ-19 ໂດຍສະເພາະມາດຕະການສະກັດກັ້ນ ແລະ ປ້ອງກັນຢ່າງເຄັ່ງຄັດ ທັງ ພາຍໃນ ແລະ ພາຍນອກ ເຮັດໃຫ້ພາກທຸລະກິດ ບໍ່ສາມາດດຳເນີນ ໄດ້ປົກກະຕິ; ນອກຈາກນີ້, ຍັງເຫັນວ່າ ການເຕີບໂຕຍັງບໍ່ທັນມີຄຸນ ນະພາບເທົ່າທີ່ຄວນ ເນື່ອງຈາກຂະ ແໜງທີ່ຊຸກຍູ້ການເຕີບໂຕ ແມ່ນ ມາຈາກຂະແໜງທີ່ນຳໃຊ້ຊັບພະຍາ ກອນທຳມະ ຊາດ ເປັນຕົ້ນ ແມ່ນ: ຂະແໜງໄຟຟ້າ, ຂະແໜງບໍ່ແຮ່ ແລະ ຂະແໜງກໍ່ສ້າງ ແມ່ນ ການລົງທຶນຂອງຕ່າງປະເທດເປັນສ່ວນໃຫຍ່ ແຕ່ຂະແໜງດັ່ງກ່າວ ບໍ່ ສະໜອງໂອກາດສ້າງວຽກເຮັດງານທຳໃຫ້ແຮງງານພາຍໃນຫຼາຍເທົ່າ ທີ່ຄວນ ແລະ ເປັນໜີ້ສິນຕ່າງປະເທດ ຊຶ່ງມີບາງກິດຈະ ການ ແມ່ນ ໄດ້ສົ່ງຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມ; ການຜະລິດສິນຄ້າ ຍັງບໍ່ມີຄວາມຫຼາກຫຼາຍ ແລະ ຄຸນນະພາບຍັງຕ່ຳ ສ່ວນຫຼາຍການຜະລິດແມ່ນເປັນວັດຖຸດິບ ແລະ ເຄິ່ງສຳເລັດຮູບ ທີ່ ສ້າງມູນຄ່າເພີ່ມບໍ່ສູງ; ເຖິງແມ່ນວ່າເສດຖະກິດ ຍັງສືບຕໍ່ຂະຫຍາຍ ຕົວ ແຕ່ລາຍຮັບຕົວຈິງຂອງປະຊາຊົນ ແມ່ນມີທ່າອ່ຽງຫຼຸດລົງ ເນື່ອງ ຈາກການອ່ອນຄ່າຂອງເງິນກີບ ບວກກັບລາຄາສິນຄ້າເພີ່ມສູງຂຶ້ນ ເຊິ່ງ ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນຫຼາຍພໍສົມຄວນ.

ເຖິງຢ່າງໃດກໍ່ຕາມ “ຜ່ານພຶດຕິກຳຕົວຈິງ ໃນການກໍ່ສ້າງ, ພັດ ທະນາ ແລະ ຍົກລະດັບພື້ນຖານເສດຖະກິດແຫ່ງຊາດ ໄປຕາມທິດ ດັ່ງ ກ່າວ, ເຫັນວ່າ ຄວາມເປັນເຈົ້າຕົນເອງດ້ານເສດຖະກິດ ເມື່ອ ທຽບກັບເງື່ອນໄຂ, ຈຸດພິເສດ, ຄວາມສາມາດ ແລະ ທ່າແຮງບໍ່ມ ຊ້ອນທີ່ມີຢູ່ຂອງປະເທດເຮົາ ແມ່ນບໍ່ທັນຢູ່ໃນທ່ວງທ່າທີ່ຕັ້ງໜ້າ ແລະໜັກແໜ້ນເທື່ອ, ຍັງເພິ່ງພາເອື່ອຍອີງໃສ່ການກູ້ຍືມ, ການ ຊ່ວຍເຫຼືອລ້າ, ອາໄສການຂຸດຄົ້ນຊັບພະຍາກອນທຳມະຊາດ ທີ່ສົ່ງ ອອກວັດຖຸດິບເປັນຕົ້ນຕໍ, ຂາດການປຸງແຕ່ງ ແລະ ບໍ່ຖືກທິດຍືນຍົງ, ປະເທກເຮົາຍັງປະເຊີນກັບການຂາດດຸນໃນຫຼາຍດ້ານເຊັ່ນ: ການຄ້າ, ພະລັງງານ, ງົບປະ ມານ, ເງິນຕາ ແລະ ແຮງງານ, ນອກນັ້ນ ສັງຄົມ ເຮົາຍັງນັບມື້ກາຍ ເປັນສັງຄົມບໍລິໂພກ, ຄົນໃນຊາດມີຄ່ານິຍົມໃຊ້ ສິນຄ້າຈາກຕ່າງປະ ເທດເປັນຕົ້ນຕໍ ແລະອື່ນໆ” (ກົມການເມືອງສູນ ກາງພັກ, 2024, ໜ້າ 1). ການໝູນໃຊ້ແນວຄິດທິດສະດີ ເສດຖະສາດ ຂອງ ຟ. ອັງແກນ ເຂົ້າໃນການພັດທະນາເສດຖະກິດ ຢູ່ ສປປ ລາວ ໃນໄລຍະຊຸມປີຜ່ານ ມາ ພວກເຮົາຍັງບາງບັນຫາຕັ້ງຂຶ້ນ ແລະ ສິ່ງທ້າທາຍຈຳນວນໜຶ່ງສະແດງອອກ ເຊັ່ນ:

1). ການຄົ້ນຄວ້າແນວຄິດທິດສະດີຂອງອັງແກນ ບໍ່ທັນເລິກ ເຊິ່ງ, ການຊຸກດັນພັດທະນາກຳລັງການຜະລິດ ມີບາງດ້ານປະຕິບັດບໍ່ ທັນໄດ້ດີ, ການສົ່ງເສີມການຜະລິດເປັນສິນຄ້າ ຍັງບໍ່ທັນກາຍເປັນທ່າ ແຮງເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ: ການຜັນ ຂະຫຍາຍສູ່ຕົວຈິງ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ໃນການ ຊຸກຍູ້ການຜະລິດພາຍໃນ ຍັງບໍ່ທັນເຂົ້າສູ່ລວງເລິກ, ຍັງບໍ່ທັນກຳນົດ ກົນໄກໃນການຈັດຕັ້ງປະຕິບັດທີ່ລະອຽດ, ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ໂດຍສະເພາະຕິດພັນກັບນະໂຍບາຍ ແລະ ມາດຕະການຫຼຸດ ຜ່ອນການນຳເຂົ້າສິນຄ້າ ຍັງບໍ່ສາມາດປະສານສົມທົບກັບພາກສ່ວນ ກ່ຽວຂ້ອງໄດ້ຢ່າງໂລ່ງລ່ຽນ ແລະ ໄປໃນທິດທາງເປົ້າໝາຍດຽວກັນ. ການສົ່ງເສີມການລົງທຶນ ແລະ ການຜະລິດໃນເຂດອຸດສາຫະກຳ ແລະ ເຂດເສດຖະກິດພິເສດ ຍັງບໍ່ທັນພົ້ນເດັ່ນ, ການສົ່ງອອກຍັງບໍ່ທັນຫຼາຍ. ພ້ອມດຽວກັນ ໂຮງງານຈຳນວນໜຶ່ງໄດ້ຢຸດຊົ່ວຄາວ ແລະ ບາງໂຮງງານ ປິດຖາວອນ; ແຮງງານຈຳນວນຫຼາຍ ໄດ້ຫຼັ່ງໄຫຼໄປອອກແຮງງານຢູ່ ຕ່າງປະເທດຫຼາຍຂຶ້ນ ແລະ ພາຍໃນປະເທດ ປະເຊີນກັບການຂາດແຮງ ງານ ໃນຫົວໜ່ວຍການຜະລິດ ແລະ ບໍລິການທີ່ສຳຄັນ.

2). ລະບົບການເກັບລາຍຮັບງົບປະມານ ຍັງບໍ່ທັນເຂັ້ມແຂງ, ບໍ່ ທັນສະໄໝ ແລະ ມີການຮົ່ວໄຫຼ, ຖານລາຍຮັບຈຳນວນໜຶ່ງ ຍັງມີການ ຍົກເວັ້ນການນຳໃຊ້ງົບປະມານຂອງລັດ ຍັງມີການຟຸມເຟືອຍ ແລະ ຮົ່ວ ໄຫຼຫຼາຍ, ການປະຕິບັດວິໄນແຜນການ ແລະ ວິໄນການເງິນ ຍັງບໍ່ທັນ ເຂັ້ມງວດເທົ່າທີ່ຄວນ ພາໃຫ້ເກີດມີໜີ້ສິນຄຸມເຄືອແກ່ຍາວ, ແກ້ໄຂໄດ້ ຍາກ ແລະ ຂາດຄວາມໂປ່ງໃສ. ການຂະຫຍາຍຖານລາຍຮັບທີ່ໝັ້ນຄົງ ແລະ ເປັນຖານລາຍຮັບຫຼັກຂອງປະເທດ ຍັງບໍ່ທັນປາກົດໃຫ້ເຫັນຊັດ ເຈນ ເປັນຕົ້ນລາຍຮັບຈາກ: ທີ່ດິນ, ຊັບສິນ; ການອັດຂອດຮົ່ວໄຫຼ ຕ່າງໆ ຍັງຊັກຊ້າ ແລະ ມີຍັງຊ່ອງຫວ່າງ. ການຫັນເປັນທັນສະໄໝໃນ ວຽກງານການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ຍັງບໍ່ທັນມີຂອດ ປະສານສົມທົບທີ່ເປັນລະບົບ, ການສະໜອງຂໍ້ມູນ ລະຫວ່າງ ຂະແໜງ ການເງິນ ແລະ ຂົງເຂດເສດຖະກິດ ຍັງບໍ່ທັນຈອດກັນ ແລະ ການນຳ ໃຊ້ເຄື່ອງມືທັນສະໄໝ ເຂົ້າໃນການຄຸ້ມຄອງເກັບລາຍຮັບບໍ່ທັນ ກວມລວມເອົາທຸກຂົງເຂດທີ່ມີລາຍຮັບໄດ້ເທື່ອ, ມີລັກສະນະກະແຈກ ກະຈາຍບໍ່ ລວມສູນ ແລະ ບໍ່ທັນພັດທະນາເຕັມຮູບແບບ ພາໃຫ້ການ ອັດຊ່ອງຫວ່າງການຮົ່ວໄຫຼ ຍັງບໍ່ສາມາດປະຕິບັດໄດ້ຢ່າງຂາດຕົວ. ການ ປະຕິ ບັດມາດຕະການຕໍ່ໂຄງການ ທີ່ບໍ່ປະຕິບັດພັນທະຕໍ່ລັດຖະບານ ຍັງບໍ່ເດັດຂາດ, ບໍ່ສາມາດເກັບໄດ້ຄົບຖ້ວນ.

3). ການສົ່ງເສີມການປະຢັດ ແລະ ມາດຕະການຕ້ານການຟຸມ ເຟືອຍ ຍັງບໍ່ທັນເຂັ້ມງວດ, ການຕັດສິນໃຈປະຢັດລາຍຈ່າຍງົບປະມານ ຂອງບາງຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ທັນເຮັດໄດ້ດີ, ຍັງມີສະ ພາບການ ສະເໜີຂໍເພີ່ມງົບປະມານບໍລິຫານປົກກະຕິຈຳນວນຫຼາຍ. ການປະຕິບັດດຳລັດວ່າດ້ວຍລິດຂອງລັດ (ເລກທີ 599/ລບ) ຍັງມີບາງ

ຂະແໜງການ ແລະ ຫຼາຍທ້ອງຖິ່ນ ຍັງບໍ່ສຳເລັດການຂຶ້ນທະບຽນຄຸ້ມຄອງ ແລະ ຕິດແຜ່ນກາໝາຍການນຳໃຊ້ລົດລັດ. ນອກຈາກນັ້ນ, ການປະຕິຮູບລັດວິສາຫະກິດ ຍັງຢູ່ໃນໄລຍະຂັ້ນຕົ້ນ ແລະ ບໍ່ທັນສ້າງໄດ້ການປະຕິຮູບລັດວິສາຫະກິດທີ່ເປັນຕົວແບບ ເຊິ່ງຕ້ອງໄດ້ເລັ່ງຄົ້ນຄວ້າຮູບແບບການປະຕິຮູບຢ່າງເລິກເຊິ່ງ ແລະ ປະຕິຮູບໃຫ້ໄວ, ການປັບກົງຈັກການຈັດຕັ້ງ ແລະ ກຳນົດຕຳແໜ່ງງານ ຍັງຊັກຊ້າ.

4). ການແກ້ໄຂສະຖຽນລະພາບທາງດ້ານການເງິນ ແລະ ອັດຕາ ແລກປ່ຽນ ຍັງບໍ່ທັນສາມາດແກ້ໄດ້ຢ່າງແຂງແຮງ ແລະ ເລິກເຊິ່ງ. ດ້ານເງິນຕາເສດຖະກິດ ຂອງປະເທດເຮົາ ຍັງປະເຊີນກັບສະພາບບອບບາງ ແລະ ຂາດສະພາບຄ່ອງດ້ານເງິນຕາຕ່າງປະເທດ, ອັດຕາແລກປ່ຽນ ຍັງຜັນຜວນສູງ ແລະ ອັດຕາເງິນເຟີ້ ຍັງຢູ່ໃນລະດັບສູງ. ຄວາມແຕກຕ່າງກັນລະຫວ່າງ ອັດຕາແລກປ່ຽນໃນລະບົບທະນາຄານ ແລະ ນອກລະບົບ ມີທ່າອ່ຽງຂະຫຍາຍຕົວອອກໃນໄລຍະປັດຈຸບັນ. ນອກຈາກນັ້ນ, ການປະຕິບັດການຄຸ້ມຄ້ອງເງິນຕາ ຂອງແຕ່ລະພາກສ່ວນ ຍັງບໍ່ທັນກົມກ່ຽວກັນ. ເຄື່ອງມືຄຸ້ມຄອງ, ດັດສົມແຊກແຊງ ເພື່ອຮອງຮັບຄວາມສ່ຽງຍັງຈຳກັດ, ຄວາມຮັບຮູ້ຄວາມເຂົ້າໃຈ, ຈັນຍາບັນ, ຈັນຍາທຳໃນການຄຸ້ມຄອງເງິນຕາ ຂອງພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງ ຍັງບໍ່ທັນເລິກເຊິ່ງ.

5). ການຄຸ້ມຄອງລັດດ້ານເສດຖະກິດ ປະສິດທິຜົນບໍ່ສູງ ທັງບໍ່ເຂັ້ມແຂງ: ຍັງເຜີຍໃຫ້ເຫັນຂໍ້ບົກພ່ອງຫຼາຍດ້ານ ສະແດງອອກໃນການປັບປຸງໂຄງສ້າງວິສາຫະກິດຂອງລັດ ຍັງຊັກຊ້າ, ຍັງບໍ່ທັນສ້າງໄດ້ການຫັນປ່ຽນຢ່າງຈະແຈ້ງ ໃນຂອບເຂດການເຄື່ອນໄຫວ, ຄຸນນະພາບການບໍລິຫານ ກໍ່ຄືປະສິດທິຜົນການດຳເນີນທຸລະກິດ ຂອງລັດວິສາຫະກິດ. ການພັດທະນາວິສາຫາກິດ ຍັງບໍ່ທັນໄດ້ດີ, ວິສາຫະກິດຂອງລັດ ຍັງບໍ່ທັນເຂັ້ມແຂງ ແລະ ຍັງບໍ່ທັນສາມາດເປັນເຈົ້າພາທາງໄດ້; ວິສາຫະກິດເອກະຊົນ ໂດຍສະເພາະວິສາຫະກິດຂະໜາດກາງ ແລະ ນ້ອຍ ຍັງບໍ່ທັນເຂັ້ມແຂງ ແລະ ຄວາມສາມາດໃນການແຂ່ງຂັນ ຂອງວິສາຫະກິດລັດ ແລະ ເອກະຊົນ ຍັງບໍ່ທັນສູງ, ການສ້າງສະພາບແວດລ້ອມດ້ານການລົງທຶນ ຍັງບໍ່ສາມາດຕອບສະໜອງຄວາມຕ້ອງການ ຂອງການລົງທຶນເທົ່າທີ່ຄວນ ເນື່ອງຈາກຂາດນິຕິກຳໃນການຊ່ວຍເຫຼືອ, ປົກປ້ອງນັກລົງທຶນ ແລະ ການເຂົ້າຫາສິນເຊື່ອ. ລະບົບກົດໝາຍ, ນະໂຍບາຍ ຍັງບໍ່ທັນເປັນເອກະພາບກັນ, ການຈັດຕັ້ງປະຕິບັດ ຍັງບໍ່ເຂັ້ມງວດ, ການເງິນ, ເງິນຕາ ຍັງບໍ່ທັນມີສະຖຽນລະພາບ ແລະ ຂາດຄວາມໂປ່ງໃສ.

IV. ສືບຕໍ່ເສີມຂະຫຍາຍແນວຄິດທິດສະດີ ເສດຖະສາດການເມືອງ ຂອງ ຟຣີດຣິກ ອັງແກນ ເຂົ້າໃນການພັດທະນາເສດຖະກິດ ຢູ່ ສປປ ລາວ ໃນຕໍ່ໜ້າ.

ພັກເຮົາໄດ້ໝູນໃຊ້ແນວຄິດ ຂອງທ່ານ ກ. ມາກ ແລະ ທ່ານ ຟ. ອັງແກນ "ການນຳໃຊ້ຫຼັກມູນນັ້ນ (ໃນຖະແຫຼງການພັກກອມມູນິດ) ແມ່ນໄດ້ອີງໃສ່ສະພາບແວດລ້ອມທັງດ້ານປະຫວັດສາດແຕ່ລະໄລຍະ ແລະ ແນວຄິດທິດສະດີແຜນໃໝ່ຂອງທ່ານ ວ. ອ. ເລນິນ ກ່ຽວກັບແລກປ່ຽນສິນຄ້າ, ນັ້ນແມ່ນໄມ້ງັດຕົ້ນຕໍຂອງນະໂຍບາຍເສດຖະກິດແຜນໃໝ່, ຖືກຕັ້ງຂຶ້ນໃນແຖວໜ້າ" (ກາກ ແລະ ຟຣີດຣິກ, 2013, ໜ້າ 467-469). ກ່ຽວກັບການນຳໃຊ້ເສດຖະກິດຫຼາຍພາກສ່ວນ, ປະຕິບັດກົນໄກເສດຖະກິດຕະຫຼາດ ກຳນົດທິດສັງຄົມນິ ຍົມ ທີ່ມີການຄຸ້ມຄອງຫຼາຍພາກສ່ວນ, ປະຕິບັດກົນໄກເສດຖະກິດຕະຫຼາດ ກຳນົດທິດສັງຄົມນິຍົມທີ່ມີການຄຸ້ມຄອງຂອງລັດ ພາຍໃຕການນຳພາຂອງພັກ ກໍ່ຄືການໝູນໃຊ້ຢ່າງວຖືກຕ້ອງການພົວພັນສັດ ຈະວິພາກລະຫວ່າງກຳລັງການຜະລິດ ແລະ ການພົວພັນການຜະລິດໃນຂະບວນວິວັດກໍ່ສ້າງສັງຄົມນິຍົມ ເຫັນຄວນເອົາໃຈໃສ່ບາງດ້ານດັ່ງນີ້:

1). ຢືດໝັ້ນ, ໝູນໃຊ້ ແລະ ເສີມຂະຫຍາຍແນວຄິດທິດສະດີ ເສດຖະສາດການເມືອງ ຂອງ ຟ. ອັງແກນ ເຂົ້າໃນການພັດທະນາເສດຖະກິດ ກ້າວຂຶ້ນສັງຄົມນິຍົມຢ່າງປະດິດສ້າງ ແລະ ກໍ່ສ້າງພື້ນຖານທາງດ້ານເສດຖະກິດອັນໜັກແໜ້ນ ໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ; ສືບຕໍ່ຢືດໝັ້ນນະໂຍບາຍເສດຖະກິດຫຼາຍພາກສ່ວນຢ່າງສະເໝີຕົ້ນສະເໝີປາຍ, ຖືທຸກພາກສ່ວນເສດຖະກິດເປັນສ່ວນປະກອບໃນກຳລັງແຮງ ຂອງພື້ນຖານເສດຖະກິດແຫ່ງຊາດ; ເອົາໃຈໃສ່ຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກຳ ກ່ຽວກັບການພັດທະນາເສດຖະກິດ ໃຫ້ສອດ ຄ່ອງກັບພຶດຕິກຳຕົວຈິງ ຂອງປະເທດເຮົາ. ໄປຄຽງຄູ່ກັບການຍົກສູງຄວາມຮັບຮູ້ ແລະ ຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ຕໍ່ກັບພາລະກິດປ່ຽນແປງໃໝ່ທາງດ້ານເສດຖະກິດ. ກວດກາຄືນນະໂຍບາຍ ຊຸກຍູ້, ສົ່ງເສີມຕໍ່ບັນດາພາກສ່ວນເສດຖະກິດ ເພື່ອແນໃສ່ສ້າງຄວາມເຂັ້ມແຂງ, ໜັກແໜ້ນ ໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ.

2). ຕ້ອງບຸກທະລຸການປ່ຽນແປງໃໝ່,ຈິນຕະນາການໃໝ່ ພັດທະນາເສດຖະກິດ-ສັງຄົມ ຫັນຈາກການພັດທະນາເສດຖະກິດແບບດັ່ງເດີມ, ຄ່ອຍເປັນຄ່ອຍໄປມາ ສູ່ການພັດທະນາແບບບຸກທະລຸຮອບດ້ານ, ເປັນລະບົບຄົບຊຸດ ໂດຍອີງໃສ່ການນຳໃຊ້ຜົນສຳເລັດ ຂອງການປະຕິ ວັດວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່ທີ່ກ້າວໜ້າຂອງຊາດ ແລະ ສາກົນ, ຄວນເລັ່ງໃສ່ການບຳລຸງສ້າງ ແລະ ນຳໃຊ້ກຳລັງແຮງງານທີ່ມີຄຸນນະພາບ, ນຳໃຊ້ແຫຼ່ງຊັບພະຍາກອນຕ່າງໆຢ່າງປະຢັດ ແລະ ມີປະສິດທິພາບສູງ ພາຍໃຕ້ການບໍລິຫານຈັດການທີ່ມີ

ປະສິດທິພາບ ແລະທັນສະໄໝ.

3). ປຸກລະດົມທຸກຂະແໜງການ ທັງພາກລັດ ແລະ ເອກະຊົນເຂົ້າຮ່ວມໃນຂະບວນການພັດທະນາເສດຖະກິດແບບບຸກທະລຸຢ່າງມີປະສິດທິພາບ ແລະ ມີຄວາມສົມດຸນ ລະຫວ່າງ 3 ເສົາຄ້ຳໄປພ້ອມໆກັນ ຄືພັດທະນາເສດຖະກິດ ຕິດພັນກັບການພັດທະນາສັງຄົມ ແລະ ການ ປົກປັກຮັກສາສິ່ງແວດລ້ອມ, ໃຫ້ຖືເອົາການພັດທະນາເປັນເປົ້າໝາຍເຄື່ອນໄຫວປະຕິບັດ, ເອົາການປ່ຽນແປງໃໝ່ຮອບດ້ານເປັນພະລັງຊຸກດັນ ແລະ ຖືເອົາການເຕີບໂຕໄວ, ມີສະຖຽນລະພາບ, ສະອາດ, ສີຂຽວ ແລະ ຍືນຍົງ ເປັນຈຸດໝາຍສູ້ຊົນປະຕິບັດ ເພື່ອຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນທາງວັດຖຸ ແລະ ຈິດໃຈໃຫ້ສູງຂຶ້ນ.

4). ສຸມກຳລັງແຮງທຸກດ້ານ ເຂົ້າໃສ່ການພັດທະນາຊັບພະຍາກອນມະນຸດ ປະຕິບັດໂຄງການປະຕິຮູບລະບົບການສຶກສາທຸກລະດັບ ໂດຍຖືເອົາຍົກດັບຄຸສອນໃຫ້ມີຄຸນນະພາບ ພ້ອມທັງປະກອບອຸປະ ກອນການສິດສອນໃຫ້ພຽງພໍ ແລະ ທັນສະໄໝ. ປັບປຸງລະບົບສາທາ ລະນະສຸກໃຫ້ທົ່ວເຖິງທ້ອງຖິ່ນຮາກຖານ ມີຄຸນນະພາບດີ; ພັດທະນາ ແລະ ສົ່ງເສີມວັດທະນະທຳທີ່ເປັນມູນເຊື້ອເອກະລັກຂອງຊາດ ຂອງບັນດາເຜົ່າ ໃຫ້ມີຫຼາກຫຼາຍສີສັນກ້າວໜ້າ ແລະ ສາມາດເຊື່ອມໂຍງກັບສາກົນ.

5). ຕ້ອງປັບປຸງປ່ຽນແປງໃໝ່ດ້ານກົນໄກການຈັດຕັ້ງຄຸ້ມຄອງລັດຢ່າງເລິກເຊິ່ງ, ເປັນລະບົບຄົບຊຸດ ແລະ ມີປະສິດທິພາບສອດຄ່ອງກັບຕົວຈິງ, ສ້າງກົນໄກນະໂຍບາຍ, ລະບອບລະບຽບການທີ່ດີ ທັນສະໄໝ ເພື່ອເອື້ອອຳນວຍຊຸກດັນໃຫ້ຂະບວນການພັດທະນາຕາມລວງເລິກທະລຸໂລ່ງຢ່າງມີຄຸນນະພາບ, ສ້າງສະພາບແວດລ້ອມທີ່ດີເອື້ອອຳນວຍໃຫ້ອັດຕະພາບເສດຖະກິດ ຂອງທຸກຂະແໜງການ, ທຸກພາກສ່ວນ ຂອງເສດຖະກິດຕະຫຼາດ ແຂ່ງຂັນກັນຢ່າງສະເໝີພາບຍຸຕິທຳ ປາສະຈາກແນວຄິດຄັບແຄບ, ອະຄະຕິຕ່າງໆ, ຈຳກັດໄດ້ຄວາມເລື່ອມລ້ຳກັນດ້ານລາຍໄດ້ ແລະ ຊີວິດການເປັນຢູ່ ຂອງກຸ່ມຄົນໃນສັງຄົມ, ສາມັກຄີພ້ອມກັນກ້າວເດີນໄປຢ່າງໜັກແໜ້ນຕາມທິດສັງຄົມນິຍົມ.

6) ປັບປຸງປ່ຽນແປງລະບອບເງິນເດືອນ ແລະ ເງິນນະໂຍບາຍ ສະຫວັດດີການສັງຄົມຕ່າງໆ ຂອງພະນັກງານລັດຖະກອນ, ກຳມະກອນ ແລະ ຊາວຜູ້ອອກແຮງງານທົ່ວໄປ ເພື່ອເປັນແຮງດຶງດູດໃຈໃນການປະຕິບັດໜ້າທີ່ອອກແຮງສ້າງສາພັດທະນາປະເທດຊາດ ແລະ ດຳລົງຊີວິດໄດ້ຢ່າງສົມສັກສີ ບໍ່ນ້ອຍໜ້າປະເທດກຳລັງພັດທະນາໃນອາຊຽນດ້ວຍກັນ ເປັນມາດຕະການໜຶ່ງທາງກົງ ແລະ ທາງອ້ອມໃນການປະຕິບັດມາດຕະການແກ້ໄຂ ແລະ ຈຳກັດປາກົດການຫຍໍ້ທໍ້, ສໍ້ລາດບັງຫຼວງໃນສັງຄົມ ໄປພ້ອມກັບການຍົກສູງປະສິດທິພາບຂອງງານສັງຄົມ ແລະ ຍົກລະດັບຊີວິດການເປັນຢູ່ ຕາມທິດປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ສະຫຼຸບແລ້ວ, ຈາກຜົນສຳເລັດ ແລະ ອັນຜິດພາດ ໃນການໝູນໃຊ້ທິດສະດີເສດຖະສາດການເມືອງ ຂອງຟຣີດຣິກ ອັງແກນ ເຂົ້າໃນພຶດຕິກຳ ຍິ່ງເຮັດໃຫ້ພວກເຮົາເຂົ້າໃຈເນື້ອໃນທີ່ວ່າ ຢູ່ໃນລັດ ທິມາກ “ທິດສະດີ ແລະ ວິທີເປັນເອກະພາບກັນຢູ່ສະເໝີ, ສະໜິດຕິດພັນກັນ ບໍ່ອາດຕັດແຍກໄດ້. ເພາະວ່າ ພວກເຮົາບໍ່ສາມາດຄົ້ນຄວ້າ ແລະ ໝູນໃຊ້ທິດສະດີ ແລະ ຫຼັກທິດສະດີຂອງລັດທິມາກ ຢ່າງປະ ດິດສ້າງໄດ້ ຖ້າຫາກບໍ່ກຳແໜ້ນສັດຈະວິພາກຂອງມັນ. ວິທີວິທະຍາ ຍາມໃດກໍ່ໄດ້ສະແດງອອກ ແລະ ສອດຫ້ອຍຢູ່ໃນຫຼັກທິດສະດີ, ເປັນ ວິນຍານທີ່ມີຊີວິດຂອງທິດສະດີ; ສ່ວນທິດສະດີ ແມ່ນຜະລິດຕະພັນອັນແນ່ນອນ ຂອງການໝູນໃຊ້ວິທີວິທະຍາຢ່າງປະດິດສ້າງ ເຂົ້າໃນພຶດຕິກຳຕົວຈິງ. ລັດທິມາກ ຍາມໃດກໍ່ແມ່ນຫຼັກທິດສະດີເປີດ ແລະຂະ ຫຍາຍຕົວຢ່າງບໍ່ຢຸດຢັ້ງ ກໍ່ຍ້ອນກະໂຕຄວາມເປັນເອກະພາບທາງດ້ານສັດຈະວິພາກ, ຄວາມຕິດພັນສະໜິດແໜ້ນແບບກາຍອິນຊີ ລະຫວ່າງ ວິທີວິທະຍາ ແລະ ທິດສະດີ. ຍ້ອນແນວນັ້ນ ມັນຈຶ່ງສົມເປັນບົດບາດພື້ນຖານແຫ່ງແນວຄິດ ແລະ ເປັນເຂັມທິດໃຫ້ແກ່ການເຄື່ອນໄຫວຂອງພັກຄອມມູນິດຢ່າງສົມກຽດ” (ກາກ ແລະ ຟຣີດຣິກ, 2013, ໜ້າ 12). ສະນັ້ນ, ພວກເຮົາຕ້ອງກຳແໜ້ນເນື້ອໃນຈິດໃຈ ຂອງວິທີສັດຈະວິພາກ, ໝູນໃຊ້ວິທີດັ່ງກ່າວຢ່າງປະດິດສ້າງ ໃນການຄົ້ນຄວ້າ, ວິເຄາະບັນຫາ, ເຫດການຕ່າງໆ ທີ່ເກີດຂຶ້ນຈາກພຶດຕິກຳ. ແກ້ໄຂບັນຫາທາດແທ້ ຂອງສາຍພົວພັນຢ່າງຈະແຈ້ງ, ຄົ້ນຄວ້າຂໍ້ຂັດແຍ່ງ ແລະ ຄົ້ນຄວ້າບັນດາທິດທາງ, ວິທີແກ້ໄຂຢ່າງລະອຽດ. ນີ້ກໍ່ແມ່ນການປະກອບສ່ວນໃນການປະຕິບັດໜ້າທີ່ ທີ່ກ່າວມາຂ້າງເທິງໃຫ້ແທດເໝາະກັບພຶດຕິກຳ ຢູ່ປະເທດເຮົາ. **ແຕ່ກ່ອນມາຮອດປະຈຸບັນ ທິດສະດີ ຂອງທ່ານ ກາກ ມາກ ແລະ ຟຣີດຣິກ ອັງແກນ ຍັງຮັກສາຄຸນຄ່າວິທະຍາສາດ ເຍືອງທາງໃຫ້ມວນມະນຸດໃນຕໍ່ໄປ.**

ເອກະສານອ້າງອີງ

ກາກ, ມ. ແລະ ຟຣີດຣິກ, ອ. (2013). *ນິພົນເລືອກເຟັ້ນເຫຼັ້ມ III* (ພາສາລາວ), ພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ກາກ, ມ. ແລະ ຟຣີດຣິກ, ອ. (2013). *ນິພົນເລືອກເຟັ້ນ ເຫຼັ້ມ IV* (ພາສາລາວ), ພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ກາກ, ມ. ແລະ ຟຣິດຣິກ, ອ. (2013). *ນິພົນເລືອກເຟັ້ນ ເຫຼັ້ມ V* (ພາສາ ລາວ), ພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ກາກ, ມ. ແລະ ຟຣິດຣິກ, ອ. (2011). *ນິພົນເລືອກເຟັ້ນ ເຫຼັ້ມ II* (ພາສາລາວ), ພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ກາກ, ມ. ແລະ ຟຣິດຣິກ, ອ. (2010). *ນິພົນເລືອກເຟັ້ນ ເຫຼັ້ມ I* (ພາສາລາວ), ພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ກາກ, ມ. ແລະ ຟຣິດຣິກ, ອ. (2002). *ນິພົນຄົບຊຸດ ເຫຼັ້ມ 4* (ພາສາຫວຽດນາມ), ສຳນັກພິມຈຳໜ່າຍ ການເມືອງແຫ່ງ ຊາດ ຮ່າໂນຍ.

ກາກ, ມ. ແລະ ຟຣິດຣິກ, ອ. (2002). *ນິພົນຄົບຊຸດ ເຫຼັ້ມ 20* (ພາສາ ຫວຽດນາມ), ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ.

ກາກ, ມ. ແລະ ຟຣິດຣິກ, ອ. (2002). *ນິພົນຄົບຊຸດ ເຫຼັ້ມ 23* (ພາສາ ຫວຽດນາມ), ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ.

ກົມການເມືອງສູນກາງພັກ. (2024). *ມະຕິວ່າດ້ວຍການສ້າງເສດ ຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່*, ສະບັບ ເລກທີ 04/ກມສພ, ລົງວັນທີ 11 ເມສາ 2024.

ຄະນະໂຄສະນາອົບຮົມສູນກາງພັກ. (2013). *ເອກະສານຄູ່ມືປາຖະ ກະຖາ.*

ສະຖາບັນວິທະຍສາດເສດຖະກິດ ແລະ ສັງຄົມແຫ່ງຊາດ. (2024). *ບົດສະຫຼຸບກາງສະໄໝ ການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX* (2021-2025).

ອາລະສານອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງ ທີ XI ພັກປະຊາຊົນປະຕິວັດລາວ,* ໂຮງພິມແຫ່ງລັດ.

ອາລະສານອາລຸນໃໝ່. (2016). *ເອກະສານກອງປະຊຸມໃຫຍ່ ຄັ້ງ ທີ X ພັກປະຊາຊົນປະຕິວັດລາວ*, ສຳນັກພິມ ແລະ ຈຳ ໜ່າຍປຶ້ມ ແຫ່ງລັດ.

ອາລະສານອາລຸນໃໝ່. (2011). *ເອກະສານຂອງກອງປະຊຸມໃຫຍ່ ຄັ້ງທີ IX ພັກປະຊາຊົນປະຕິວັດລາວ*, ໂຮງພິມແຫ່ງລັດ.

ອາລະສານອາລຸນໃໝ່. (2006). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ VIII ພັກປະຊາຊົນປະຕິວັດລາວ.*